ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ
PHOUTHEN PASAXON

ສຳນັກງານຕັ້ງຢູ່ອາລານລະບະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

09-16 ພຶດສະພາ 2024
ປີທີ 13
ສະບັບທີ 969
ລາຍສັປປະດາ

## ກອງປະຊຸມສຳມະນາກ່ຽວກັບການຍົກສູງຄວາມສາມາດການດຳເນີນຄະດີ ຕາມຂະບວນການຍຸຕິທຳ ແລະ ການແກ້ໄຂຄຳຮ້ອງທຸກ

(ສພຊ) - ກອງປະຊຸມສຳມະນາກ່ຽວກັບການຍົກສູງຄວາມສາມາດວຽກງານການດຳເນີນຄະດີຕາມຂະບວນການຍຸຕິທຳ ແລະ ການແກ້ໄຂຄຳຮ້ອງທຸກ ໄດ້ໄຂຂຶ້ນໃນວັນທີ06-07 ພຶດສະພາ 2024 ທີ່ເມືອງວັງວຽງ ແຂວງວຽງຈັນພາຍໃຕ້ການເປັນປະທານຂອງທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ ໂດຍມີທ່ານ ຄຳແພງ ວິລະພັນ ປະທານກຳມາທິການຍຸຕິທຳ, ບັນດາທ່ານຮອງປະທານກຳມາທິການຂອງສະພາແຫ່ງຊາດ, ຮອງຫົວໜ້າອົງການໄອຍະການປະຊາຊົນ




ສູງສຸດ, ຮອງປະທານສານປະຊາຊົນສູງສຸດ, ຜູ້ຕາງໜ້າກະຊວງປ້ອງກັນຄວາມສະຫງົບ (ກົມສືບສວນ-ສອບສວນ), ຜູ້ຕາງໜ້າກະຊວງຍຸຕິທຳ (ກົມຄຸ້ມຄອງການປະຕິບັດຄຳຕັດສິນຂອງສານ), ບັນດາທ່ານປະທານ, ຮອງປະທານສະພາປະຊາຊົນຂັ້ນແຂວງ, ຜູ້ຊີ້ນຳວຽກງານຍຸຕິທຳ, ສະມາຊິກສະພາແຫ່ງຊາດ ສັງກັດກຳມາທິການຍຸຕິທຳ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ສັງກັດຄະນະກຳມະການຍຸຕິທຳແລະປ້ອງກັນຊາດ-ປ້ອງກັນຄວາມສະຫງົບໃນຂອບເຂດທົ່ວປະເທດ ພ້ອມດ້ວຍພະນັກງານຈາກພາກສ່ວນກ່ຽວຂ້ອງເຂົ້າຮ່ວມຢ່າງຫຼວງຫຼາຍ.

ກອງປະຊຸມຄັ້ງນີ້ມີຄວາມສຳຄັນຫຼາຍ ເພາະເປັນໂອກາດໃຫ້ຜູ້ເຂົ້າຮ່ວມກອງປະຊຸມໄດ້ມີຄວາມຮັບຮູ້ ແລະ ຄວາມເຂົ້າໃຈຢ່າງເລິກເຊິ່ງ ກ່ຽວກັບຂະບວນການດຳເນີນຂະບວນຍຸຕິ

ອ່ານຕໍ່ໜ້າ 3

## ມອບ-ຮັບ ເຄື່ອງ ຊ່ວຍເຫຼືອຕ້ານໄພໜາວ




(ສພຊ) - ວັນທີ 08 ພຶດສະພາ 2024 ທີ່ຫ້ອງຮັບແຂກສະພາແຫ່ງຊາດ ໄດ້ມີພິທີມອບ-ຮັບເຄື່ອງຊ່ວຍເຫຼືອຈາກມູນນິທິ ພັດທະນາ ລ້ານຊ້າງ-ແມ່ຂອງ, ໂຮງຮຽນ Shanghai Tianshan No.1 Primary School ແລະ ໂຮງຮຽນ Shanghai Qibao Dwight High School; ເຄື່ອງທີ່ນຳມາມອບ

ອ່ານຕໍ່ໜ້າ 4

## ຍົກລະດັບການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ



(ສພຊ) - ກອງປະຊຸມເຝິກອົບຮົມການຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ໃຫ້ແກ່ພະນັກງານ-ລັດຖະກອນຂອງສະພາແຫ່ງຊາດ (ສພຊ) ໄດ້ຈັດຂຶ້ນໃນລະຫວ່າງວັນທີ 3-5 ພຶດສະພາ 2024 ທີ່ເມືອງປາກຊັນ ແຂວງບໍລິຄຳໄຊ ໂດຍການເປັນປະທານຂອງທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ຮອງປະທານສະພາແຫ່ງຊາດ, ປະທານກຳມາທິການກົດໝາຍ ເຊິ່ງມີຄະນະຮັບຜິດຊອບ, ກອງເລຂາ, ວິທະຍາກອນ ແລະ ສຳມະນາ

ອ່ານຕໍ່ໜ້າ 4

## ສືບຕໍ່ກວດກາເນື້ອໃນຮອບດ້ານ ຮ່າງກົດໝາຍການສົ່ງເສີມການລົງທຶນ

(ສພຊ) - ກອງປະຊຸມກວດກາເນື້ອໃນຮອບດ້ານຮ່າງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ (ສະບັບປັບປຸງ) ໄດ້ຈັດຂຶ້ນໃນລະຫວ່າງວັນທີ 07-09 ພຶດສະພາ 2024 ທີ່ຫ້ອງການສົ່ງເສີມແລະຄຸ້ມຄອງເຂດເສດຖະກິດພິເສດ, ໂດຍການເປັນປະທານຂອງທ່ານ

ອ່ານຕໍ່ໜ້າ 2



## ສຳມະນາການຈັດຕັ້ງບັດວິໄສທັດ ແລະ ຍຸດທະສາດການພັດທະນາແຮ່ທາດ




ອ່ານຕໍ່ໜ້າ 3

## ສະຫຼຸບຜົນການຕິດຕາມກວດກາວຽກງານ ພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ



(ສພຊ)-ເພື່ອທົບທວນການຈັດຕັ້ງປະຕິບັດ 09 ຄາດໝາຍ ຂອງວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ຕາມມະຕິ 82/ສພຊ ແລະຜົນຂອງການປະເມີນຕາມດຳລັດ 348/ລບ ວ່າດ້ວຍມາດຕະຖານພົ້ນທຸກ ແລະ ມາດຕະຖານພັດທະນາ ຕາມຕົວຊີ້ວັດທີ່ໄດ້ກຳນົດ ພ້ອມທັງຖອດຖອນບົດຮຽນກ່ຽວກັບກົນໄກການປະສານສົມທົບ ແລະພົວພັນປະສານງານລະຫວ່າງບັນດາຂະແໜງການຂັ້ນສູນກາງ ກໍຄືທ້ອງຖິ່ນ ໃນການຈັດຕັ້ງປະຕິບັດວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ເພື່ອຍົກສູງຄວາມເປັນເອກະພາບ ແລະ ຄວາມຮັບຜິດຊອບໃນການຈັດຕັ້ງປະຕິບັດມະຕິຂອງສະພາແຫ່ງຊາດໃນຂົງເຂດວຽກງານດັ່ງກ່າວໃຫ້ມີປະສິດທິຜົນສູງກວ່າເກົ່າ.

ໃນລະຫວ່າງວັນທີ 06-07 ພຶດສະພາ 2024 ທີ່ສະພາ

ອ່ານຕໍ່ໜ້າ 4




ທິດທາງການ... (ໜ້າ 9)



ກະທຽມ... (ໜ້າ 10)



ອີຣັກ... (ໜ້າ 11)




ສ້າງເງື່ອນໄຂ... (ໜ້າ 12)

# ກອງປະຊຸມໃຫຍ່ຄັ້ງທີ II ຂອງໜ່ວຍຊາວໜຸ່ມຮາກຖານ ກປຊສ



(ສພຊ) - ກອງປະຊຸມໃຫຍ່ຄັ້ງທີ II ຂອງຄະນະໜ່ວຍຊາວໜຸ່ມຮາກຖານກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ (ກປຊສ) ໄດ້ຈັດຂຶ້ນໃນຕອນບ່າຍຂອງວັນທີ02ພຶດສະພາ 2024 ທີ່ສະພາແຫ່ງຊາດ ໂດຍການເປັນປະທານຮ່ວມຂອງສະຫາຍ ພິຈອ. ປອ. ມາລາ ວິລະຈິດຮອງເລຂາໜ່ວຍພັກຮາກຖານ, ຮອງປະທານ ກປຊສ, ສະຫາຍ ພອນແກ້ວ ຕົ້ນວໍລະຈິດ ກຳມະການຄະນະບໍລິຫານງານສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ, ເລຂາຄະນະບໍລິຫານງານຊາວໜຸ່ມສະພາແຫ່ງຊາດ ແລະ ສະຫາຍ ພັທ. ປະກອບໄຊ ສິດທິລາດວົງສາ ເລຂາໜ່ວຍຊາວໜຸ່ມຮາກຖານ ກປຊສ; ມີບັນດາສະຫາຍຕາງໜ້າຈາກໜ່ວຍຊາວໜຸ່ມຮາກຖານພາຍໃນສະພາແຫ່ງຊາດ, ໜ່ວຍແມ່ຍິງຮາກຖານ ແລະ ສະມາຊິກຊາວໜຸ່ມຮາກຖານກປຊສເຂົ້າຮ່ວມທັງໝົດ 32 ສະຫາຍ ຍິງ 14 ສະຫາຍ.

ກອງປະຊຸມໄດ້ຮັບຟັງການລາຍງານບົດສຳຫຼວດການນຳພາ ແລະ ພ້ອມກັນສະຫຼຸບຕີລາຄາ, ພິຈາລະນາແລະຮັບຮອງເອົາບົດລາຍງານການເມືອງຂອງໜ່ວຍຊາວໜຸ່ມຮາກຖານກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບເຊິ່ງປະກອບມີ 2 ພາກຄື: 1. ຕີລາຄາສະພາບການເຄື່ອນໄຫວໄລຍະຜ່ານມາແຕ່ປີ 2020-2024 ໃນນັ້ນ, ໄດ້ຍົກໃຫ້ເຫັນດ້ານດີຜົນງານຕ່າງໆທີ່ຍາດມາໄດ້ ພ້ອມທັງດ້ານອ່ອນຂໍ້ຄົງຄ້າງ ແລະ ບັນດາສາເຫດທີ່ຕ້ອງໄດ້ປັບປຸງແກ້ໄຂ ເພື່ອຮັບປະກັນໃຫ້ການເຄື່ອນໄຫວວຽກງານດີຂຶ້ນກວ່າເກົ່າ; 2. ກຳນົດທິດທາງການເຄື່ອນໄຫວວຽກງານໄລຍະ 5 ປີ(2024-2028) ໃນນັ້ນ, ຕົ້ນຕໍແມ່ນເພີ່ມທະວີສຶກສາອົບຮົມການເມືອງແນວຄິດ, ການພັດທະນາວຽກງານຊາວໜຸ່ມ ຕິດພັນກັບການເປັນເສນາທິການໃຫ້ແກ່ໜ່ວຍພັກຮາກຖານ ກປຊສ ໄປພ້ອມກັບການຈັດຕັ້ງປະຕິບັດຂໍ້ແຂ່ງຂັນ 4 ບຸກ ແລະ ແຜນການທີ່ວາງໄວ້ ໃຫ້ມີປະສິດທິພາບແລະປະສິດທິຜົນສູງຂຶ້ນກວ່າເກົ່າທັງຮັບຮອງເອົາບົດສຳຫຼວດການນຳພາຂອງຄະນະໜ່ວຍຊາວໜຸ່ມຮາກຖານກ່ຽວກັບການນຳພາ-ຊີ້ນຳຂອງຕົນຕໍ່ວຽກງານຊາວໜຸ່ມຕະຫຼອດໄລຍະ 5 ປີ ຜ່ານມາ ເຊິ່ງຍົກໃຫ້ເຫັນດ້ານດີຜົນງານ, ດ້ານອ່ອນຂໍ້ຄົງຄ້າງ ແລະ ບົດຮຽນທີ່ຖອດຖອນໄດ້ຈຳນວນໜຶ່ງ ທີ່ຄະນະໜ່ວຍຊາວໜຸ່ມຮາກຖານຊຸດໃໝ່ຈະຕ້ອງນຳໄປເປັນບົດຮຽນໃນການສືບຕໍ່ປັບປຸງແກ້ໄຂເພື່ອຮັບປະກັນໃຫ້ແກ່ການເຄື່ອນໄຫວວຽກງານຊາວໜຸ່ມ ກໍຄືການຜັນຂະຫຍາຍຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ II ຂອງໜ່ວຍຊາວໜຸ່ມຮາກຖານ ກປຊສ ບັນລຸຕາມຄາດໝາຍທີ່ວາງໄວ້.

ສະມາຊິກຊາວໜຸ່ມຮາກຖານກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໄດ້ໃຊ້ສິດປະຊາທິປະໄຕຂອງຕົນປ່ອນບັດຄັດເລືອກເອົາຄະນະໜ່ວຍຊາວໜຸ່ມຮາກຖານຊຸດໃໝ່ ເຊິ່ງມີຜູ້ສະໝັກ 5 ສະຫາຍ ຍິງ 1 ສະຫາຍ, ເລືອກໄດ້ 3 ສະຫາຍ ຍິງ 1 ສະຫາຍ ເຊິ່ງກອງປະຊຸມຄັ້ງປະຖົມມະລຶກໄດ້ເຫັນດີເລືອກເອົາສະຫາຍ ພັຕ. ສະນັ່ນ ພົມພັກດີ ເປັນເລຂາ, ສະຫາຍ ພັຕ. ນາງທອງສະໝຸດອ່ອນກໍລະບຸດ ເປັນຮອງເລຂາທັງເປັນປະທານກວດກາ ແລະ ສະຫາຍ ຮອ. ສິດວົງທອງ ເບັ້ງເພັງໃຈ ເປັນກຳມະການ.

ໃນໂອກາດນີ້, ຍັງໄດ້ຮັບຟັງການໂອ້ລົມຈາກສະຫາຍ ພິຈອ. ປອ. ມາລາ ວິລະຈິດ ເຊິ່ງໄດ້ເນັ້ນໃຫ້ຄະນະໜ່ວຍຊາວໜຸ່ມຮາກຖານຊຸດໃໝ່ແລະສະມາຊິກຊາວໜຸ່ມພາຍໃນໜ່ວຍທັງໝົດເອົາໃຈໃສ່ຕັ້ງໜ້າສຶກສາອົບຮົມສະມາຊິກຊາວໜຸ່ມໃຫ້ມີຄວາມໜັກແໜ້ນ, ເຂັ້ມແຂງທາງດ້ານການເມືອງ-ແນວຄິດ, ມີຄຸນສົມບັດສິນທຳປະຕິວັດ, ຮັກຊາດ, ຮັກລະບອບປະຊາທິປະໄຕ, ເປັນແບບຢ່າງໃນການເຄື່ອນໄຫວປະຕິບັດໜ້າທີ່ວຽກງານແລະການດຳລົງຊີວິດ; ສືບຕໍ່ປັບປຸງກົງຈັກແລະພະນັກງານ, ສະມາຊິກຊາວໜຸ່ມ ໃຫ້ເຂັ້ມແຂງຮອບດ້ານ ແລະ ປະຕິບັດຫຼັກການລວມສູນປະຊາທິປະໄຕຢ່າງເຂັ້ມງວດ; ສືບຕໍ່ຮັກສາມູນເຊື້ອຄວາມສາມັກຄີ, ມີທັດສະນະມະຫາຊົນ, ມີຄວາມດຸໝັ່ນອົດທົນ, ຄົ້ນຄວ້າສຶກສາຮ່ຳຮຽນ ຍົກລະດັບຄວາມຮູ້-ຄວາມສາມາດ ໃນການປະຕິບັດວຽກງານໃຫ້ສູງຂຶ້ນເລື້ອຍໆ; ສ້າງ ແລະ ເຂົ້າຮ່ວມຂະບວນການເຄື່ອນໄຫວວຽກງານຊາວໜຸ່ມໃຫ້ຫຼາຍ, ມີບັນຍາກາດຟົດຟື້ນ, ຫ້າວຫັນ ໂດຍມີເນື້ອໃນຕິດພັນກັບການສຶກສາອົບຮົມໄປພ້ອມໆກັນ ແລະ ຍົກສູງສະຕິໃນການບໍລິໂພກຂ່າວສານ ໂດຍມີການກັ່ນຕອງເລືອກເຟັ້ນເອົາສິ່ງທີ່ດີ, ຖືກຕ້ອງ ແລະ ສາມາດໝູນໃຊ້ເຂົ້າໃນການປະຕິບັດໜ້າທີ່ວຽກງານຢ່າງມີປະສິດທິຜົນ.

**(ນາງ ປາກາລັກ ພົມມີໄຊ)**

## ສືບຕໍ່...

(ຕໍ່ຈາກໜ້າ 1)

ສົມມາດ ພົລເສນາ ຮອງປະທານສະພາແຫ່ງຊາດ. ເຂົ້າຮ່ວມມີທ່ານປະທານ-ຮອງປະທານກຳມາທິການແຜນການ, ການເງິນ ແລະ ການສວດສອບ, ຮອງປະທານກຳມາທິການກົດໝາຍ; ບັນດາທ່ານຮອງລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ, ກະຊວງການເງິນ, ກະຊວງພະລັງງານ ແລະ ບໍ່ແຮ່, ກະຊວງຊັບພະຍາກອນທຳມະຊາດແລະສິ່ງແວດລ້ອມ, ກະຊວງອຸດສາຫະກຳ ແລະ ການຄ້າ; ບັນດາທ່ານຄະນະທີ່ປຶກສາທາງດ້ານກົດໝາຍຂອງຄະນະປະຈຳສະພາແຫ່ງຊາດ, ຄະນະກົມ, ຄະນະພະແນກ ແລະ ວິຊາການທີ່ກ່ຽວຂ້ອງ.



ກອງປະຊຸມໄດ້ສືບຕໍ່ຄົ້ນຄວ້າປະກອບຄຳຄິດຄຳເຫັນໃສ່ຮ່າງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ (ສະບັບປັບປຸງ) ເຊິ່ງຄະນະຮັບຜິດຊອບປັບປຸງກົດໝາຍ ແລະ ບັນດາທ່ານທີ່ເຂົ້າຮ່ວມກອງປະຊຸມ ໄດ້ພ້ອມກັນຄົ້ນຄວ້າ, ປະກອບຄຳເຫັນ ແລະ ເປັນເອກະພາບກັນຕໍ່ຮ່າງກົດໝາຍດັ່ງກ່າວທີ່ປະກອບມີXII ພາກ, 28 ໝວດ ແລະ 103 ມາດຕາ ເພື່ອເຮັດໃຫ້ເນື້ອໃນຂອງຮ່າງກົດໝາຍສະບັບນີ້ ຄົບຖ້ວນ ແລະ ສອດຄ່ອງກັບລັດຖະທຳມະນູນ, ກົດໝາຍອື່ນທີ່ປະກາດໃຊ້ແລ້ວ, ສົນທິສັນຍາ, ສັນຍາສາກົນທີ່ກ່ຽວຂ້ອງ ແລະ ການຈັດຕັ້ງປະຕິບັດຕົວຈິງ.

ເຫດຜົນ ແລະ ຄວາມຈຳເປັນໃນການປັບປຸງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ເນື່ອງຈາກວ່າຍັງບໍ່ທັນແທດເໝາະກັບສະພາບຕົວຈິງ ແລະ ບໍ່ສອດຄ່ອງກັບເງື່ອນໄຂຂອງການພັດທະນາເສດຖະກິດ-ສັງຄົມໃນປັດຈຸບັນ; ຍັງມີບາງເນື້ອໃນທີ່ບໍ່ຈະແຈ້ງ, ລະອຽດ, ຮັດກຸມ ແລະ ຄົບຖ້ວນ ເພື່ອຮັບປະກັນຜົນປະໂຫຍດຂອງເຈົ້າຂອງຊັບສິນທາງປັນຍາ ແລະ ປະຊາຊົນລາວບັນດາເຜົ່າ. ຈາກນັ້ນ, ກຳມາທິການກົດໝາຍ ຈະໄດ້ລາຍງານຜົນສຳເລັດຂອງການກວດກາເນື້ອໃນຮອບດ້ານຂອງຮ່າງກົດໝາຍ ຕໍ່ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ເພື່ອຕົກລົງເອົາໄປທາບທາມຄຳເຫັນກັບບັນດາທ່ານສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນຂັ້ນແຂວງ ແລະ ພະແນກການ, ຂະແໜງການທີ່ກ່ຽວຂ້ອງ ກ່ອນນຳເຂົ້າພິຈາລະນາຮັບຮອງເອົາໃນກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດ ຊຸດທີ IX ທີ່ຈະໄດ້ໄຂຂຶ້ນໃນໄວໆນີ້.

**(ນາງ ໄຊໂສພາພອນ ມິ່ງມຸງຄຸນ)**

## ເລື່ອງ ເດັ່ນ ຂ່າວ ເດັດ

*# ຄັດໂດຍ: ທອມສະນິດ*

*❐ ສປປ ລາວ ໄດ້ເອົາໃຈໃສ່ການໃຊ້ຄວາມຮຸນແຮງຕໍ່ເດັກ ໂດຍຜ່ານການເພີ່ມທະວີການປະສານງານການນຳໃຊ້ມາດຕະການປ້ອງກັນ ແລະ ການຕອບໂຕ້ການໃຊ້ຄວາມຮຸນແຮງຕໍ່ເດັກ ຢູ່ໃນເຮືອນ, ໂຮງຮຽນ, ສະຖານທີ່ທາງອອນລາຍ ແລະ ໃນຊຸມຊົນ ການສຳຫຼວດດັດຊະນີໝາຍສັງຄົມ ຄັ້ງທີ 3 (LSIS III) ຂອງ ສປປລາວ ໃນປີ 2023 ຊີ້ໃຫ້ເຫັນເຖິງການຫຼຸດລົງຂອງການປະຕິບັດວິໄນຕໍ່ເດັກທີ່ໃຊ້ຄວາມຮຸນແຮງ ໂດຍອັດຕາສ່ວນຂອງເດັກອາຍຸ 1-14 ປີ ທີ່ໄດ້ຮັບການລົງໂທດທາງຮ່າງກາຍຫຼຸດລົງຈາກ77% ມາເປັນ62% ນອກຈາກນີ້, ການປັບປຸງກົດໝາຍວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກແມ່ນໜຶ່ງໃນການຈັດຕັ້ງປະຕິບັດຕົວຈິງຂອງລັດຖະບານ ສປປ ລາວ ໃນການຈັດຕັ້ງປະຕິບັດຂໍ້ສະເໜີແນະຂອງຄະນະກຳມະການສິດທິເດັກຂອງສະຫະປະຊາຊາດ ໃນການສ້າງຄວາມເຂັ້ມແຂງໃຫ້ແກ່ລະບົບການປົກປ້ອງເດັກຂອງ ສປປ ລາວ.*

***ໜສພ. ວຽງຈັນໃໝ່ 03/05/2024***

*❐ ໃນປີ 2024, ກົມປ່າໄມ້ ກະຊວງກະສິກຳ-ປ່າໄມ້ ຕັ້ງເປົ້າໝາຍປູກໄມ້ ໃຫ້ໄດ້ 35.000 ເຮັກຕາ, ຟື້ນຟູປ່າໃຫ້ໄດ້ 300.000 ເຮັກຕາ, ກ້າເບ້ຍໄມ້ໃຫ້ໄດ້ 50.000 ເບ້ຍ, ເກັບແກ່ນໄມ້ໃຫ້ໄດ້ 16.000 ກິໂລ, ຂຶ້ນທະບຽນປ່າປູກໃນແຂວງເປົ້າໝາຍ ຄື: ຫຼວງພະບາງ, ວຽງຈັນ ແລະ ສະຫວັນນະເຂດ ໃຫ້ໄດ້ 1.114 ເຮັກຕາ; ໃນນັ້ນ, ຫຼວງພະບາງ ໃຫ້ໄດ້ 34.000 ເຮັກຕາ, ວຽງຈັນ ໃຫ້ໄດ້ 35.000 ເຮັກຕາ ແລະ ສະຫວັນນະເຂດ ໃຫ້ໄດ້ 45.000 ເຮັກຕາ; ພ້ອມກັນນີ້, ຍັງຈະຈັດສັນປ່າຜະລິດແບບຍືນຍົງໃຫ້ໄດ້ ຈຳນວນ 5 ແຫ່ງ ໃຫ້ສອດຄ່ອງກັບກົດໝາຍ, ນິຕິກຳໃຕ້ກົດໝາຍ ແລະ ພຶດຕິກຳຕົວຈິງ ຢູ່ໃນແຕ່ລະທ້ອງຖິ່ນ.*

***ໜສພ. ປະຊາຊົນ 03/05/2024***

*❐ ບົດລາຍງານການຄາດຄະເນການພັດທະນາຂອງອາຊີ ຂອງທະນາຄານພັດທະນາອາຊີ (ADB) ສະບັບຫຼ້າສຸດທີ່ເຜີຍແຜ່ໃນວັນທີ 11 ເມສາ 2024 ໄດ້ຄາດຄະເນວ່າ ເສດຖະກິດ ກໍຄື ລວມຍອດຜະລິດຕະພັນພາຍໃນປະເທດ ຫຼື ຈີດີພີ ຂອງ ສປປ ລາວ ຈະເຕີບໂຕໃນລະດັບ 4% ໃນປີ 2024 ແລະ ປີ 2025 ເຊິ່ງໄດ້ຮັບແຮງຍູ້ຈາກຄວາມຕ້ອງການພາຍນອກທີ່ເຊື່ອມໂຍງກັບການທ່ອງທ່ຽວແລະການຄ້າ ໂດຍຄາດວ່າຈະມີນັກທ່ອງທ່ຽວເຂົ້າມາ ສປປ ລາວ ເພີ່ມຂຶ້ນ 4,2 ລ້ານເທື່ອຄົນ ໃນປີ 2024 ຍ້ອນພື້ນຖານໂຄງລ່າງເຊື່ອມຕໍ່ໄດ້ຮັບການປັບປຸງດີຂຶ້ນ, ການລົງທຶນຂອງຕ່າງປະເທດໃນຂະແໜງພະລັງງານທົດແທນ ຈະຊ່ວຍຊຸກຍູ້ການເຕີບໂຕຂອງຂະແໜງອຸດສາຫະກຳໃນລະດັບປານກາງ ເຊັ່ນ: ການພັດທະນາໂຄງການພະລັງງານລົມມອນຊູນ ຄາດວ່າຈະສຳເລັດພາຍໃນປີ 2025.*

***ໜສພ. ປະເທດລາວ 06/05/2024***

*❐ ຕັ້ງແຕ່ມີລະບົບຊັບສິນທາງປັນຍາເຂົ້າມາ ສປປ ລາວ ແມ່ນມີທ່າອ່ຽງຂະຫຍາຍຕົວຢ່າງຫຼວງຫຼາຍ ເປັນຕົ້ນມີການຍື່ນຄຳຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າຢູ່ ສປປ ລາວ ແລ້ວ 62.000 ກວ່າເຄື່ອງໝາຍ, ແບບອຸດສາຫະກຳຫຼາຍ ກວ່າ 700 ກວ່າສະບັບ, ມີການແຈ້ງຂໍ້ມູນລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ຫຼາຍກວ່າ 800 ກວ່າສະບັບ, ການແກ້ໄຂຂໍ້ຂັດແຍ່ງທາງດ້ານບໍລິຫານຫຼາຍກວ່າ 160 ກໍລະນີ ແລະ ເປີເຊັນການຍື່ນຄຳຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າຂອງຄົນລາວ ໄລຍະປີ 2019-2023 (5 ປີ) ແມ່ນມີພຽງແຕ່ 5%.*

***ໜສພ. ວຽງຈັນໃໝ່ 07/06/2024***



## ກອງປະຊຸມ...

(ຕໍ່ຈາກໜ້າ 1)

ທຳ, ການແກ້ໄຂຄຳຮ້ອງທຸກຕາມຂັ້ນຕອນຕ່າງໆຢ່າງລະອຽດເພື່ອເຮັດໃຫ້ການຈັດຕັ້ງປະຕິບັດວຽກງານແກ້ໄຂຄຳຮ້ອງທຸກ ມີຄວາມເປັນເອກະພາບກັນ, ມີຄວາມຖືກຕ້ອງ ແລະ ສອດຄ່ອງກັບກົດໝາຍ ແລະ ຄວາມເປັນຈິງ ສາມາດນຳໄປຈັດຕັ້ງປະຕິບັດໄດ້ຢ່າງມີປະສິດທິພາບ ແລະ ປະສິດທິຜົນ.

ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ໄດ້ມີຄຳເຫັນກ່າວເປີດໂດຍໄດ້ເນັ້ນໜັກວ່າ: ກອງປະຊຸມຄັ້ງນີ້ ມີຫຼາຍເນື້ອໃນທີ່ມີຄວາມໝາຍສຳຄັນ ເພາະແມ່ນການຈັດຕັ້ງປະຕິບັດຫຼັກການຂອງຂະບວນການດຳເນີນຄະດີ ເຊິ່ງເປັນການຜັນຂະຫຍາຍມະຕິຂອງກົມການເມືອງສູນກາງພັກສະບັບເລກທີ112/ກມສພ, ລົງວັນທີ 02 ມິຖຸນາ 2020 ວ່າດ້ວຍການຍົກສູງຄຸນນະພາບໃນການດຳເນີນຄະດີຕາມຂະບວນການຍຸຕິທຳ ຕາມກົດໝາຍກຳນົດໄວ້ ເຊິ່ງຄະນະປະຈຳສະພາແຫ່ງຊາດ ຈະໄດ້ລາຍງານຕໍ່ກອງປະຊຸມຄົບຄະນະຂອງຄະນະບໍລິຫານງານສູນກາງພັກໃນຕໍ່ໜ້ານີ້ ແນໃສ່ເຮັດໃຫ້ການດຳເນີນຄະດີດຳເນີນໄປໃນທິດທາງດຽວກັນ ບົນພື້ນຖານທິດຊີ້ນຳຂອງພັກ, ລະບຽບກົດໝາຍຂອງລັດ ຮັບປະກັນໃຫ້ ການດຳເນີນຄະດີມີຄວາມຖືກຕ້ອງ, ໂປ່ງໃສ, ວ່ອງໄວ ແລະ ນຳເອົາຜົນປະໂຫຍດມາສູ່ປະຊາຊົນຢ່າງແທ້ຈິງ.

ໃນກອງປະຊຸມ ຜູ້ແທນເຂົ້າຮ່ວມໄດ້ຮັບຟັງການນຳສະເໜີບົດຮຽນກ່ຽວກັບສະພາບລວມການດຳເນີນຄະດີຂອງ ສປປ ລາວ; ບົດຮຽນໃນການປະຕິບັດຄຳຕັດສິນຂອງສານ, ການພິຈາລະນາ ແລະ ແກ້ໄຂຄຳສະເໜີ ແລະ ຄຳຮ້ອງຂໍຄວາມເປັນທຳ ທີ່ພົວພັນກັບການປະຕິບັດຄຳຕັດສິນຂອງສານ; ບົດຮຽນໃນການດຳເນີນຄະດີຂອງອົງການສືບສວນ-ສອບສວນ, ການດຳເນີນຄະດີແພ່ງຂອງສານປະຊາຊົນ ແລະ ການດຳເນີນຄະດີອາຍາຂອງອົງການໄອຍະການປະຊາຊົນ; ບົດຮຽນໃນການຈັດຕັ້ງປະຕິບັດວຽກການຮັບ ແລະ ພິຈາລະນາຄຳຮ້ອງຂໍຄວາມເປັນທຳ ຂອງກຳມາທິການຍຸຕິທຳສະພາແຫ່ງຊາດ.

ບັນດາຜູ້ເຂົ້າຮ່ວມໃນກອງປະຊຸມ ກໍໄດ້ພ້ອມກັນເອົາໃຈໃສ່ຍົກສູງຄວາມຮັບຜິດຊອບການ ເມືອງຂອງຕົນ ໃນການຄົ້ນຄວ້າ ແລະ ແລກປ່ຽນຄວາມຄິດເຫັນຢ່າງກົງໄປກົງມາ, ດ້ວຍເຫດດ້ວຍຜົນ ໂດຍສະເພາະແມ່ນຈຸດທີ່ຍັງບໍ່ທັນເປັນເອກະພາບ ແລະ ຈະແຈ້ງ ຫຼື ສາເຫດທີ່ພາໃຫ້ການດຳເນີນຄະດີຕາມຂະບວນການຍຸຕິທຳ ມີຄວາມຊັກຊ້າ, ມີຄວາມຫຍຸ້ງຍາກ ແລະ ໄດ້ມີການສະເໜີບັນດາທິດທາງໃນການແກ້ໄຂບັນຫາທີ່ຍັງຄົງຄ້າງ, ສະເໜີໃຫ້ບັນດາພາກສ່ວນກ່ຽວຂ້ອງມີການປະສານສົມທົບກັນຢ່າງແໜ້ນແຟ້ນ, ຊອກຫາບັນດາມາດຕະການທີ່ສອດຄ່ອງເພື່ອຮັບປະກັນຄວາມຖືກຕ້ອງ, ຄົບຖ້ວນ, ຮອບດ້ານ ແລະ ພາວະວິໄສໃນຂະບວນການຍຸຕິທຳທັງໃຫ້ຖືກຕ້ອງຕາມກົດໝາຍ ແລະ ທັງສອດ ຄ່ອງກັບຄວາມເປັນຈິງ.

**(ນາງ ປາກາລັກ ພົມມີໄຊ)**

# ອົບຮົມການນຳໃຊ້ລະບົບເຄືອຂ່າຍພາຍໃນ

(ສພຊ) - ເພື່ອຈັດຕັ້ງຜັນຂະຫຍາຍແຜນພັດທະນາການຍົກສູງຂີດຄວາມສາມາດໃຫ້ແກ່ສະມາຊິກສະພາແຫ່ງຊາດ (ສສຊ), ສະມາຊິກສະພາປະຊາຊົນຂັ້ນແຂວງ (ສສຂ) ແລະ ພະນັກງານທີ່ເປັນເສນາທິການ ໄລຍະ 5 ປີ (2021-2025) ໃຫ້ເປັນຮູບປະທຳໃນວຽກງານຕົວຈິງ; ເພື່ອປັບປຸງການສະໜອງຂໍ້ມູນ-ຂ່າວສານຜ່ານລະບົບເຄືອຂ່າຍພາຍໃນ ຮັບໃຊ້ໃຫ້ແກ່ການຄົ້ນຄວ້າ, ຕົກລົງບັນຫາຕ່າງໆຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງສະມາຊິກສະພາ ທັງຢູ່ສູນກາງ ແລະ ທ້ອງຖິ່ນໃນຂອບເຂດທົ່ວປະເທດ; ເພື່ອເຝິກອົບຮົມວິທີນຳໃຊ້ລະບົບເຄືອຂ່າຍພາຍໃນໃຫ້ແກ່ພະນັກງານໃຫ້ກາຍເປັນຄູເຝິກທີ່ສາມາດເຜີຍແຜ່, ແນະນຳວິທີນຳໃຊ້ລະບົບເຄືອຂ່າຍພາຍໃນຂອງສະພາແຫ່ງຊາດ (ສພຊ) ໃຫ້ແກ່ເປົ້າໝາຍຕ່າງໆຂອງການຈັດຕັ້ງ, ທ້ອງຖິ່ນຮາກຖານຂອງຕົນ ທັງປະກອບສ່ວນປັບປຸງເນື້ອໃນ ແລະ ບຳລຸງຮັກສາລະບົບເຄືອຂ່າຍພາຍໃນໄດ້ເປັນຢ່າງດີ. ສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ (ສນສ) ຈຶ່ງໄດ້ຈັດກອງປະຊຸມເຝິກອົບຮົມການເປັນຄູເຝິກການນຳໃຊ້ລະບົບເຄືອຂ່າຍພາຍໃນຂອງສະພາແຫ່ງຊາດ ໃຫ້ແກ່ພະນັກງານ ສພຊ, ສະພາປະຊາຊົນແຂວງ (ສພຂ) 6 ແຂວງພາກເໜືອຄື: ຜົ້ງສາລີ, ຫຼວງນ້ຳທາ, ອຸດົມໄຊ, ບໍ່ແກ້ວ, ຫຼວງພະບາງ ແລະ ແຂວງໄຊຍະບູລີ ໃນລະຫວ່າງວັນທີ 06-07 ພຶດສະພາ 2024 ທີ່ເມືອງງາ ແຂວງ



ອຸດົມໄຊ ພາຍໃຕ້ການເປັນປະທານຂອງທ່ານ ຄຳແທ່ນ ວິລະກຸນ ຮອງຫົວໜ້າສະຖາບັນຄົ້ນຄວ້ານິຕິກຳ ໂດຍການເຂົ້າຮ່ວມຂອງທ່ານ ວຽງໄຊ ຄຳພະຈັນ ຮອງເຈົ້າເມືອງງາ ຜູ້ຊີ້ນຳວຽກງານພັດທະນາພະນັກງານ; ມີບັນດາທ່ານເລຂາທິການ-ຮອງເລຂາທິການສພຂ, ຫົວໜ້າ-ຮອງຫົວໜ້າສູນ, ຄະນະພະແນກ ແລະ ລັດຖະກອນວິຊາການພາຍໃນສະຖາບັນດັ່ງກ່າວ ພ້ອມດ້ວຍສຳມະນາກອນຈາກບັນດາກົມ-ສູນພາຍໃນ ສພຊ ແລະ ສພຂ 6 ແຂວງ ເຂົ້າຮ່ວມ.

ໃນກອງປະຊຸມ, ທ່ານ ຮອງເຈົ້າເມືອງງາ ໄດ້ກ່າວຕ້ອນຮັບຢ່າງອົບອຸ່ນ ແລະ ລາຍງານໃຫ້ຊາບໂດຍຫຍໍ້ສະພາບລວມ, ທ່າແຮງ ແລະ ການພັດທະນາເສດຖະກິດ-ສັງຄົມຂອງເມືອງ. ຈາກນັ້ນ, ກໍໄດ້ຮັບຟັງການສະເໜີວິທີການສະໝັກການນຳໃຊ້ລະບົບເຄືອຂ່າຍພາຍໃນສະພາແຫ່ງຊາດ, ການເຂົ້າເຖິງ ແລະ ຊອກຫາເອກະສານແລະນິຕິກຳຂອງສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ ແລະ ບັນດາອົງການລັດ ໃນລະບົບເຄືອຂ່າຍພາຍໃນແລະການຄຸ້ມຄອງ,ປັບປຸງ ແລະ ບົວລະບັດຮັກສາລະບົບ; ພ້ອມດຽວກັນນີ້, ຜູ້ເຂົ້າຮ່ວມກໍໄດ້ແລກປ່ຽນຖາມ-ຕອບຢ່າງກົງໄປກົງມາ ທັງໄດ້ລົງທະບຽນສະໝັກເຂົ້ານຳໃຊ້ເຄືອຂ່າຍດັ່ງກ່າວ ແລະ ທົດລອງນຳໃຊ້ຕົວຈິງໃນການເຂົ້າລະບົບ ແລະ ຊອກຄົ້ນບັນດາເອກະສານທີ່ຕ້ອງການ, ວິທີບຳລຸງຮັກສາລະບົບດັ່ງກ່າວ ໃຫ້ມີຄວາມປອດໄພເພື່ອເຮັດໃຫ້ສາມາດເຂົ້າໃຈຢ່າງຈະແຈ້ງ ແລະ ສາມາດນຳໃຊ້ໄດ້ຢ່າງຄ່ອງຕົວ ເພື່ອຈະສືບຕໍ່ນຳເອົາບົດຮຽນໃນຄັ້ງນີ້ ໄປເຝິກຕໍ່ໃຫ້ແກ່ພະນັກງານ-ລັດຖະກອນໃນຂົງເຂດຂອງຕົນສາມາດຮັບປະກັນໃນການຄົ້ນຄວ້າ, ໄດ້ຮັບຂໍ້ມູນຖືກຕ້ອງແລະສະໜອງຂໍ້ມູນໃຫ້ມີຄວາມວ່ອງໄວ ແກ່ ສສຊ ແລະ ສສຂ.

ກອງປະຊຸມຄັ້ງນີ້ ໄດ້ຮັບການສະໜັບສະໜູນຊ່ວຍເຫຼືອທາງດ້ານງົບປະມານຈາກໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງຫຼືສະເຕັບສ໌ (STEPs) ໂດຍຜ່ານກອງເລຂາຄຸ້ມຄອງແຫຼ່ງທຶນຊ່ວຍເຫຼືອລ້າໃຫ້ແກ່ສະພາແຫ່ງຊາດ.

**(ນາງ ກົງໃຈ ແສງອຳພັນ)**



## ສຳມະນາ...

(ຕໍ່ຈາກໜ້າ 1)

(ສພຊ) - ວັນທີ 03 ພຶດສະພາ 2024 ທີ່ຫ້ອງປະຊຸມກະຊວງພະລັງງານ ແລະ ບໍ່ແຮ່ ໄດ້ມີກອງປະຊຸມສຳມະນາວິທະຍາສາດ "ການຈັດຕັ້ງປະຕິບັດວິໄສທັດ ແລະ ຍຸດທະສາດການພັດທະນາແຮ່ທາດ" ໂດຍການເປັນປະທານຂອງທ່ານ ສົມມາດ ພົລເສນາ ຮອງປະທານສະພາແຫ່ງຊາດ; ເຂົ້າຮ່ວມມີທ່ານ ນາງ ປິ່ງຄຳ ລາຊະສົມມາ ປະທານກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ, ທ່ານ ທອງພັດ ອິນທະວົງ ຮອງລັດຖະມົນຕີກະຊວງພະລັງງານ ແລະ ບໍ່ແຮ່, ບັນດາທ່ານຮອງປະທານກຳມາທິການຂອງສະພາແຫ່ງຊາດ, ບັນດາທ່ານປະທານ ແລະ ຮອງປະທານຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງແລະພາກສ່ວນທີ່ກ່ຽວຂ້ອງ.

ທັງນີ້, ເພື່ອເປັນການທົບທວນ, ຖອດຖອນບົດຮຽນກ່ຽວກັບດ້ານດີ, ດ້ານອ່ອນ, ຂໍ້ຄົງຄ້າງ ແລະ ຊອກວິທີແກ້ໄຂຮ່ວມກັນຢ່າງມີປະສິດທິຜົນ, ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດໃນແຕ່ລະໄລຍະ, ຮັບປະກັນການນຳໃຊ້ຊັບພະຍາກອນແຮ່ທາດທີ່ມີຢູ່ ຢ່າງຍາວນານ ແລະ ສ້າງຜົນປະໂຫຍດສູງສຸດແກ່ປະເທດຊາດ ແລະ ເພື່ອເປັນການກະກຽມຂໍ້ມູນລາຍງານຕໍ່ກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດຊຸດທີ IX ທີ່ຈະໄຂຂຶ້ນໃນເດືອນມິຖຸນາທີ່ຈະມາເຖິງນີ້.

ທ່ານສົມມາດພົລເສນາໃຫ້ຮູ້ວ່າ: ຜ່ານມາລັດຖະບານໄດ້ມີນະໂຍບາຍກ່ຽວກັບວຽກງານງານແຮ່ທາດ ໂດຍສະເພາະນະໂຍບາຍດຳເນີນການຂຸດຄົ້ນ, ປຸງແຕ່ງ, ສົ່ງອອກ ແຮ່ທາດໃນຮູບແບບທົດລອງ ຕາມຂໍ້ຕົກລົງສະບັບເລກທີ 61/ນຍ, ລົງວັນທີ 21 ມິຖຸນາ 2021 ເພື່ອແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ; ສະພາແຫ່ງຊາດກໍໄດ້ມີມະຕິຂອງກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 95/ສພຊ, ລົງວັນທີ 18 ກໍລະກົດ 2023 ວ່າດ້ວຍການຮັບຮອງວິໄສທັດຮອດປີ 2020 ແລະຍຸດທະສາດການພັດທະນາແຮ່ທາດຮອດປີ 2030 ຂອງລັດຖະບານ. ຜ່ານການຈັດຕັ້ງປະຕິບັດຕົວຈິງ ເຫັນວ່າມີທັງຂໍ້ສະດວກ ແລະ ກໍຍັງມີບາງດ້ານທີ່ທ້າທາຍ, ທ່ານປະທານກອງປະຊຸມ ຈຶ່ງໄດ້ຮຽກຮ້ອງໃຫ້ບັນດາຜູ້ເຂົ້າຮ່ວມ ປະກອບຄຳຄິດຄຳເຫັນຢ່າງກົງໄປກົງມາ, ຍົກໃຫ້ເຫັນບັນຫາຕົວຈິງຢູ່ແຕ່ລະທ້ອງຖິ່ນ ພ້ອມທັງເຫດຜົນທາງດ້ານວິຊາການ ບົນພື້ນຖານຄວາມສອດຄ່ອງກັບກົດໝາຍ ແລະ ນິຕິກຳໃຕ້ກົດໝາຍທີ່ກ່ຽວຂ້ອງ ແນໃສ່ເຮັດໃຫ້ການພັດທະນາວຽກງານແຮ່ທາດຂອງປະເທດເຮົາ ປະຕິບັດຖືກຕ້ອງຕາມທິດມີຈຸດສຸມ, ທັນເປັນອຸດສາຫະກຳ, ທັນສະໄໝ, ສີຂຽວ ແລະ ຍືນຍົງ, ສ້າງລາຍຮັບສູງສຸດໃຫ້ແກ່ລັດ ແລະ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດຕາມແນວທາງນະໂຍບາຍຂອງພັກ.

ກອງປະຊຸມໄດ້ຮັບຟັງບັນດາບົດລາຍງານ: ສະພາບການຈັດຕັ້ງປະຕິບັດວຽກງານທໍລະນີສາດ ແລະ ແຮ່ທາດ ແລະ ການຜັນຂະຫຍາຍວິໄສທັດແລະຍຸດທະສາດການພັດທະນາແຮ່ທາດ, ສະພາບການຈັດຕັ້ງປະຕິບັດວຽກງານບໍ່ແຮ່ ແລະ ການຜັນຂະຫຍາຍວິໄສທັດແລະຍຸດທະສາດການພັດທະນາແຮ່ທາດ, ການຄຸ້ມຄອງໂຄງການຂຸດຄົ້ນ ແລະ ປຸງແຕ່ງແຮ່ຫາຍາກ (ຮູບແບບທົດລອງ), ສະພາບການຄົ້ນຄວ້າວຽກງານທໍລະນີສາດ ແລະ ບໍ່ແຮ່ ທີ່ຕິດພັນກັບການຜັນຂະຫຍາຍວິໄສທັດແລະຍຸດທະສາດການພັດທະນາແຮ່ທາດ, ການຈັດຕັ້ງປະຕິບັດການສ້າງຄວາມເຂັ້ມແຂງຮອບດ້ານໃຫ້ແກ່ລັດວິສາຫະກິດພັດທະນາແຮ່ທາດລາວ ທີ່ຕິດພັນກັບການຜັນຂະຫຍາຍວິໄສທັດແລະຍຸດທະສາດການພັດທະນາແຮ່ທາດ, ຄວາມຄືບໜ້າການກໍ່ສ້າງໂຮງງານຫຼອມເຫຼັກ ແລະ ບົດປະກອບຄຳເຫັນຂອງສະພາປະຊາຊົນແຂວງຫົວພັນ, ຊຽງຂວາງ, ຄຳມ່ວນ, ວຽງຈັນແລະເຊກອງ.

**(ພາບ: ນາງ ກຸກກິກ ບຸດດາໄຊ ແລະ ຂ່າວ: ນາງ ອາລິນ ສຸພົມມະປະດິດ)**



## ສະຫຼຸບ...

(ຕໍ່ຈາກໜ້າ 1)

ແຫ່ງຊາດ, ກຳມາທິການບັນດາເຜົ່າ ຮ່ວມກັບກະຊວງກະສິກຳ ແລະ ປ່າໄມ້ ໄດ້ຈັດກອງປະຊຸມສະຫຼຸບຜົນການຕິດຕາມກວດກາຂອງຄະນະປະຈຳສະພາແຫ່ງຊາດຕໍ່ວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ປະຈຳປີ 2023 ໂດຍການເປັນປະທານຂອງທ່ານ ພົທ. ສຸວອນ ເລືອງບຸນມີ ຮອງປະທານສະພາແຫ່ງຊາດ; ມີບັນດາທ່ານປະທານ-ຮອງປະທານກຳມາທິການຂອງສະພາແຫ່ງຊາດ, ລັດຖະມົນຕີ-ຮອງລັດຖະມົນຕີ, ຫົວໜ້າ-ຮອງຫົວໜ້າອົງການ ແລະ ພະນັກງານຈາກພາກສ່ວນທີ່ກ່ຽວຂ້ອງ, ຮອງເຈົ້າແຂວງ (ຈຳນວນໜຶ່ງ) ຜູ້ຊີ້ນຳວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກເຂົ້າຮ່ວມຢ່າງຫຼວງຫຼາຍ.

ທ່ານ ພົທ. ສຸວອນ ເລືອງບຸນມີ ໄດ້ມີຄຳເຫັນໂອ້ລົມ ແລະ ກ່າວເປີດກອງປະຊຸມ ເຊິ່ງມີບາງຕອນວ່າ: ກອງປະຊຸມຄັ້ງນີ້ ມີຄວາມສຳຄັນຫຼາຍໃນລະດັບຍຸດທະສາດຂອງການພັດທະນາເພື່ອປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ຄັ້ງທີ IX (2021-2025) ເວົ້າລວມ, ເວົ້າສະເພາະວຽກງານພັດທະນາຊົນນະບົດໃຫ້ມີປະສິດທິພາບ ແລະ ປະສິດທິຜົນ; ຮຽກຮ້ອງບັນດາຜູ້ເຂົ້າຮ່ວມ ຈົ່ງຍົກສູງຄວາມຮັບຜິດຊອບຂອງຕົນເພື່ອຄົ້ນຄວ້າແລະແລກປ່ຽນຄຳຄິດຄຳເຫັນຢ່າງມີຈຸດສຸມເຂົ້າໃສ່ວຽກງານດັ່ງກ່າວນີ້ຢ່າງຈິງຈັງ.

ກອງປະຊຸມ ໄດ້ຮັບຟັງການສະເໜີເນື້ອໃນທີ່ສຳຄັນຈາກວິທະຍາກອນອ້ອມຂ້າງສູນກາງຄື: ຜົນການຈັດຕັ້ງປະຕິບັດບັນດາຄາດໝາຍຂອງວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ຕາມມະຕິ 82/ສພຊ, ລົງວັນທີ 30/12/2022 ແລະຜົນຂອງການປະເມີນຕາມດຳລັດ 348/ລບ, ລົງວັນທີ 16/11/2017 ວ່າດ້ວຍມາດຕະຖານພົ້ນທຸກ ແລະ ມາດຕະຖານພັດທະນາ; ຜົນການຈັດຕັ້ງປະຕິບັດວຽກງານ 03 ສ້າງ ປະຈຳປີ 2023; ຜົນການຕິດຕາມກວດກາຂອງຄະນະປະຈຳສະພາແຫ່ງຊາດຕໍ່ການຈັດຕັ້ງປະຕິບັດວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ຕາມມະຕິ 82/ສພຊ. ຈາກນັ້ນ, ບັນດາທ່ານຜູ້ແທນກອງປະຊຸມໄດ້ປະກອບຄຳຄິດຄຳເຫັນເພື່ອແລກປ່ຽນບົດຮຽນ, ປະສົບການ ແລະ ທັດສະນະ ເພື່ອເປັນທິດໃນການປັບປຸງຂອດການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ໃຫ້ປະສົບຜົນສຳເລັດພົ້ນເດັ່ນກວ່າເກົ່າ.

**(ອານຸສອນ ພູມມີທອນ)**



## ມອບ-ຮັບ...

(ຕໍ່ຈາກໜ້າ 1)

ໃນຄັ້ງນີ້ ປະກອບມີ: ຜ້າຫົ່ມ, ເຄື່ອງກັນໜາວ ທັງເດັກນ້ອຍ ແລະ ຜູ້ໃຫຍ່ ຈຳນວນ 100 ແກັດ ມູນຄ່າ 15.000 ໂດລາສະຫະລັດ. ທັງນີ້, ກໍເພື່ອເປັນການຊ່ວຍເຫຼືອຜູ້ທຸກຍາກຂາດເຂີນທີ່ຢູ່ເຂດຫ່າງໄກສອກຫຼີກຕ່າງໆໃນຂອບເຂດທົ່ວປະເທດ ຕ້ານກັບອາກາດໜາວເຢັນ ໂດຍຜ່ານສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ເພື່ອນຳໄປສິ່ງມອບແກ່ປະຊາຊົນເຂດຫ່າງໄກສອກຫຼີກ.

ຕາງໜ້າຮັບໂດຍທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ ແລະ ຕາງໜ້າມອບໂດຍທ່ານ ນາງ ພູຄຳ ວົງວິຈິດ ປະທານມູນນິທິ ພັດທະນາ ລ້ານຊ້າງ-ແມ່ຂອງ; ໂດຍມີຮອງເລຂາທິການສະພາແຫ່ງຊາດ, ຄະນະກົມ, ຄະນະພະແນກ ແລະ ພາກສ່ວນທີ່ກ່ຽວຂ້ອງ ເຂົ້າຮ່ວມເປັນສັກຂີພະຍານ.

ໃນພິທີ, ທ່ານ ນາງ ສູນທອນ ໄຊຍະຈັກ ໄດ້ສະແດງຄວາມຂອບອົກຂອບໃຈຕໍ່ 3 ພາກສ່ວນທີ່ມີຄວາມເປັນຫ່ວງເປັນໄຍຕໍ່ປະຊາຊົນລາວຜູ້ທຸກຍາກເຂດຫ່າງໄກສອກຫຼີກພ້ອມທັງໃຫ້ຄຳໝັ້ນສັນຍາວ່າຈະນຳເອົາເຄື່ອງຊ່ວຍເຫຼືອດັ່ງກ່າວ ໄປຮອດໄປເຖິງຢ່າງແນ່ນອນ.

**(ນາງ ອາລິນ ສຸພົມມະປະດິດ)**



## ຍົກລະດັບ...

(ຕໍ່ຈາກໜ້າ 1)

ກອນ ຈາກພາກສ່ວນທີ່ກ່ຽວຂ້ອງພາຍໃນ ສພຊ ເຂົ້າຮ່ວມ 30 ກວ່າທ່ານ; ທັງນີ້ ກໍເພື່ອເປັນການຍົກລະດັບຄວາມຮູ້, ຄວາມສາມາດ ແລະ ສົ່ງເສີມທັກສະທາງດ້ານວິຊາການ ເພື່ອສາມາດປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ໃນການເປັນເສນາທິການທາງດ້ານວຽກງານຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍຢ່າງເປັນລະບົບຄົບຊຸດ, ມີປະສິດທິພາບ, ຮັດກຸມ ແລະ ເປັນເອກະພາບ ຕອບສະໜອງໃຫ້ໄດ້ຕາມຄວາມຮຽກຮ້ອງຕ້ອງການໃນການປະຕິບັດໜ້າທີ່ວຽກງານຕົວຈິງ.

ຜູ້ເຂົ້າຮ່ວມໄດ້ຮັບຟັງການສະເໜີມະຕິຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ, ປື້ມຄູ່ມືການຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ແລະ ບົດຮຽນການຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ 3 ຂົງເຂດ (ເສດຖະກິດ-ການເງິນ, ປກຊ-ປກສ ແລະ ຍຸຕິທຳ); ເຜີຍແຜ່ມະຕິຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການຕິດຕາມກວດກາການຜັນຂະຫຍາຍມາດຕາຂອງກົດໝາຍທີ່ກຳນົດໃຫ້ອອກເປັນນິຕິກຳໃຕ້ກົດໝາຍ, ມະຕິວ່າດ້ວຍການຕີຄວາມໝາຍ ແລະ ອະທິບາຍກົດໝາຍ, ມະຕິວ່າດ້ວຍການໂຄສະນາເຜີຍແຜ່ລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍຂອງສະພາແຫ່ງຊາດ ແລະ ຄຳແນະນຳຂອງຄະນະປະຈຳສະພາແຫ່ງຊາດ ກ່ຽວກັບການສະຫຼຸບຕີລາຄາການໂຄສະນາເຜີຍແຜ່ກົດໝາຍ. ຈາກນັ້ນ, ກໍໄດ້ຈັດແບ່ງກຸ່ມເພື່ອທົດລອງການຄົ້ນຄວ້າຂຽນແຜນການ ແລະ ເອກະສານຕົວຈິງ ແນໃສ່ເຮັດໃຫ້ຜູ້ເຂົ້າຮ່ວມສາມາດເຝິກຝົນການຂຽນເນື້ອໃນຕົ້ນຕໍກ່ຽວກັບການຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ເພື່ອເປັນເສນາທິການໃຫ້ແກ່ຄະນະນຳກຳມາທິການໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວ.

ທ່ານ ສຈ. ປອ. ຈະເລີນ ເຍຍປາວເຮີ ໄດ້ມີຄຳເຫັນໂອ້ລົມກ່ອນປິດກອງປະຊຸມເຊິ່ງມີບາງຕອນວ່າ: ວຽກງານຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ເຖິງແມ່ນວ່າຍັງເປັນວຽກງານໃໝ່ສຳລັບພວກເຮົາກໍຕາມ, ແຕ່ຕ້ອງໄດ້ພ້ອມກັນຕັ້ງໜ້າຈັດຕັ້ງປະຕິບັດໃຫ້ມີປະສິດທິພາບ ແລະ ປະສິດທິຜົນດີຂຶ້ນກວ່າເກົ່າເພື່ອຮັບປະກັນໃຫ້ບັນດາຂະແໜງການຕ່າງໆ ຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ໃຫ້ມີຄວາມເຂັ້ມງວດ ແລະ ສັກສິດ; ຜ່ານການຮັບຟັງການສະເໜີບົດ, ເຜີຍແຜ່ ແລະ ປະກອບຄຳເຫັນຂອງບັນດາທ່ານທີ່ເຂົ້າຮ່ວມໃນຄັ້ງນີ້ເຫັນວ່າມີຫຼາຍດ້ານທີ່ມີຜົນສຳເລັດອັນພົ້ນເດັ່ນ ແລະ ມີບາງດ້ານທີ່ຍັງພົບຄວາມຫຍຸ້ງຍາກ ເປັນຕົ້ນຄວາມເຂົ້າໃຈຕໍ່ກັບບັນດາອົງການທີ່ເປັນໃຈກາງ, ເປັນເຈົ້າການໃນການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍຕົວຈິງ, ໄລຍະເວລາໃນການປະເມີນ, ກົນໄກການຕິດຕາມກວດກາພາຍຫຼັງກອງປະຊຸມສະພາແຫ່ງຊາດ ໄດ້ພິຈາລະນາຮັບຮອງແລ້ວ, ງົບປະມານສະໜອງໃຫ້ແກ່ວຽກງານດັ່ງກ່າວ ແລະອື່ນໆ ເຊິ່ງຂ້າພະເຈົ້າຂໍມີຄຳເຫັນຕື່ມບາງບັນຫາດັ່ງນີ້: 1). ສືບຕໍ່ເຜີຍແຜ່, ຄົ້ນຄວ້າ, ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດຕາມມະຕິຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ, ມະຕິວ່າດ້ວຍການຕິດຕາມກວດກາການຜັນຂະຫຍາຍມາດຕາຂອງກົດໝາຍທີ່ກຳນົດໃຫ້ອອກເປັນນິຕິກຳໃຕ້ກົດໝາຍ ໃຫ້ເລິກເຊິ່ງກວ້າງຂວາງຕື່ມ; 2). ເອົາໃຈໃສ່ຄົ້ນຄວ້າປື້ມຄູ່ມືການຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວຕົວຈິງ ແລະ ພະຍາຍາມຖອດຖອນບົດຮຽນຈາກການຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍໃນ 3 ຂົງເຂດທີ່ຜ່ານມາ ໃຫ້ລະອຽດຊັດເຈນ ເພື່ອປັບປຸງແກ້ໄຂວິທີ, ຂັ້ນຕອນ, ຮູບການ ໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ໃຫ້ດີຂຶ້ນເທື່ອລະກ້າວ; 3). ເພີ່ມທະວີການປະສານສົມທົບກັບບັນດາກຳມາທິການພາຍໃນສະພາແຫ່ງຊາດ ເພື່ອກຳນົດແຜນຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍໃນແຕ່ລະປີ ໃຫ້ມີຄວາມວ່ອງໄວ, ຊັດເຈນ ແລະ ທັນຕາມກຳນົດເວລາ; 4). ເພີ່ມທະວີປະສານສົມທົບກັບບັນດາກະຊວງ, ອົງການທີ່ຢູ່ໃນຄວາມຮັບຜິດຊອບຂອງກຳມາທິການຕົນ ເພື່ອຕິດຕາມກວດກາບັນດາກົດໝາຍ ແລະ ນິຕິກຳທີ່ເຫັນວ່າຍັງບໍ່ທັນສອດຄ່ອງກັບລັດຖະທຳມະນູນ ແລະ ກົດໝາຍ, ມາດຕາໃດຂອງກົດໝາຍທີ່ຍັງບໍ່ທັນໄດ້ຈັດຕັ້ງຜັນຂະຫຍາຍອອກເປັນນິຕິກຳໃຕ້ກົດໝາຍ.

ກອງປະຊຸມໃນຄັ້ງນີ້ໄດ້ຮັບການສະໜັບສະໜູນຊ່ວຍເຫຼືອທາງດ້ານງົບປະມານຈາກໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດແລະສະພາປະຊາຊົນຂັ້ນແຂວງ ຫຼື ສະເຕັບສ໌ (STEPs) ໂດຍຜ່ານກອງເລຂາຄຸ້ມຄອງແຫຼ່ງທຶນຊ່ວຍເຫຼືອລ້າໃຫ້ແກ່ສະພາແຫ່ງຊາດ.

**(ອານຸສອນ ພູມມີທອນ)**

# ມສ. ແກ້ວປັນຍາ ທັດສະນະສຶກສາ ສພຂ ຫົວພັນ




(ສພຊ) - ຕອນເຊົ້າວັນທີ 30 ເມສາ 2024 ສະພາປະຊາຊົນແຂວງ (ສພຂ) ຫົວພັນ ໄດ້ຕ້ອນຮັບການທັດສະນະສຶກສາຂອງຄູອາຈານ ແລະ ນັກຮຽນໂຮງຮຽນມັດທະຍົມສົມບູນແກ້ວປັນຍາ ນຳໂດຍອາຈານ ມິດຕະພອນ ວຽງຄຳເຜີດ ໂດຍການຕ້ອນຮັບຂອງທ່ານ ນາງ ນິດພອງ ສີ ວັນນະວົງ ຫົວໜ້າຂະແໜງຄົ້ນຄວ້າສັງລວມ ແລະ ຂໍ້ມູນ-ຂ່າວສານ ພ້ອມດ້ວຍຄະນະ.

ການມາທັດສະນະສຶກສາຄັ້ງນີ້, ຜູ້ຕາງໜ້າໂຮງຮຽນ ມສ. ແກ້ວປັນຍາ ໄດ້ສະແດງຄວາມຂອບໃຈຕໍ່ການຕ້ອນຮັບຢ່າງອົບອຸ່ນຂອງ ສພຂ ຫົວພັນ ພ້ອມທັງສະເໜີຈຸດປະສົງໃນການມາຄັ້ງນີ້ຂອງຄູອາຈານ ແລະ ນ້ອງນັກຮຽນ ເຊິ່ງທາງໂຮງຮຽນກຽມຈະເປີດກອງປະຊຸມສະພາແບບຈຳລອງຄັ້ງທີ 1 ຂຶ້ນໃນມໍ່ໆນີ້; ຈາກນັ້ນ, ທ່ານ ນາງ ນິດພອງ ສີ ວັນນະວົງ ໄດ້ມີຄຳເຫັນຕ້ອນຮັບພ້ອມທັງລາຍງານທີ່ຕັ້ງ, ພາລະບົດບາດ, ສິດ ແລະ ໜ້າທີ່ຂອງ ສພຂ, ຂັ້ນຕອນໃນການຈັດກອງປະຊຸມ ແລະ ພື້ນຖານໃນການລົງຄະແນນສຽງ ຮັບຮອງເອົາບັນດາມະຕິຕ່າງໆຢູ່ກອງປະຊຸມສະພາ ທັງໄດ້ເປີດໂອກາດໃຫ້ຄູອາຈານ ແລະ ນ້ອງນັກຮຽນທີ່ມີຄວາມສົນໃຈຕໍ່ວຽກງານ ສພຂ ໄດ້ຖາມຂໍ້ຂ້ອງໃຈຂອງຕົນ; ຈາກນັ້ນ, ຫົວໜ້າ-ຮອງຫົວໜ້າຂະແໜງ ພາຍໃນ ສພຂ ຍັງໄດ້ອະທິບາຍ, ໃຫ້ຄວາມກະຈ່າງແຈ້ງຕໍ່ບັນຫາທີ່ມີຄວາມສົນໃຈ ເພື່ອເປັນການເພີ່ມຄວາມຮູ້, ຄວາມເຂົ້າໃຈກ່ຽວກັບທີ່ຕັ້ງພາລະບົດບາດ, ສິດ ແລະ ໜ້າທີ່ຂອງ ສພຂ ໃຫ້ຈະແຈ້ງຂຶ້ນຕື່ມ ເພື່ອເປັນການຮຽນຮູ້ນອກສະຖານທີ່ ແລະ ສຶກສາອົບຮົມການເມືອງແນວຄິດໃຫ້ນ້ອງໆນັກຮຽນ ເອົາໃຈໃສ່ສຶກສາຮ່ຳຮຽນ ໃຫ້ກາຍເປັນຜູ້ທີ່ຮຽນດີຮຽນເກັ່ງ ສາມາດປະກອບສ່ວນວຽກງານອັນສຳຄັນເຂົ້າໃນການສ້າງສາພັດທະນາປະເທດຊາດ ແລະ ເປັນຜູ້ສືບທອດທີ່ດີໃນອະນາຄົດ.

**(ນາງ ປຸ້ຍນິຕາ ເພັງມີໄຊ)**

# ສພຂ ສາລະວັນ ສຳເລັດການລະດົມຄຳຄິດເຫັນໃສ່ຮ່າງກົດໝາຍ 5 ສະບັບ



(ສພຊ) - ຮ່າງກົດໝາຍວ່າດ້ວຍສະຫະກອນ (ສ້າງໃໝ່), ຮ່າງກົດໝາຍວ່າດ້ວຍຊັບພະຍາກອນທີ່ເປັນຢາ (ສ້າງໃໝ່), ຮ່າງກົດໝາຍວ່າດ້ວຍການຕ້ານການສໍ້ລາດບັງຫຼວງ (ສະບັບປັບປຸງ), ຮ່າງກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ (ສະບັບປັບປຸງ) ແລະ ຮ່າງກົດໝາຍວ່າດ້ວຍການກັນ ແລະ ຄວບຄຸມເຊື້ອເອັດຈ໌ໄອວີ/ພະຍາດເອດ (ສະບັບປັບປຸງ) ໄດ້ນຳເຂົ້າກອງປະຊຸມທາບທາມລະດົມຄຳຄິດເຫັນໃສ່ເນື້ອໃນບາງໝວດບາງມາດຕາ ຢ່າງກວ້າງຂວາງ, ເພື່ອຮັບປະກັນໃຫ້ເນື້ອໃນຂອງຮ່າງກົດໝາຍດັ່ງກ່າວ ມີເນື້ອໃນທີ່ເໝາະສົມ, ຄົບຖ້ວນ, ຮັດກຸມ ແລະ ສອດຄ່ອງກັບສະພາບການຂະຫຍາຍຕົວຂອງເສດຖະກິດ-ສັງຄົມທັງເປັນການສັງລວມຂໍ້ມູນການປະກອບຄຳເຫັນ ເປັນບ່ອນອີງລາຍງານໃຫ້ແກ່ຄະນະປະຈຳສະພາແຫ່ງຊາດ ກ່ອນທີ່ຈະນຳເຂົ້າພິຈາລະນາໃນກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດ ຊຸດທີ IX ທີ່ຈະຈັດຂຶ້ນໃນເດືອນມິຖຸນາ ທີ່ຈະມາເຖິງນີ້.

ບັນດາຮ່າງກົດໝາຍດັ່ງກ່າວ ລ້ວນແຕ່ມີຄວາມຈຳເປັນທີ່ຕ້ອງສ້າງໃໝ່ ແລະ ປັບປຸງ ໃນສະພາບການເສດຖະກິດ-ສັງຄົມໃນປັດຈຸບັນ ແລະ ມີການກວດກາປະເມີນຄືນ, ຖອດຖອນບົດຮຽນເອກະພາບກັນປັບປຸງກົດໝາຍທີ່ຍັງບໍ່ທັນແທດເໝາະໃຫ້ດີຂຶ້ນກວ່າເກົ່າ ແນໃສ່ເຮັດໃຫ້ການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ ດ້ວຍກົດໝາຍ ມີຜົນສັກສິດ ແລະ ເຂັ້ມງວດ ໂດຍການປະກອບສ່ວນເຂົ້າໃນການສ້າງລັດດ້ວຍກົດໝາຍຂອງປະຊາຊົນ, ໂດຍປະຊາຊົນ ແລະ ເພື່ອຜົນປະໂຫຍດຂອງປະຊາຊົນຢ່າງແທ້ຈິງ.

ກອງປະຊຸມໄດ້ມີຂຶ້ນໃນລະຫວ່າງວັນທີ 24-25 ເມສາ 2024 ຢູ່ທີ່ຫ້ອງປະຊຸມສະພາປະຊາຊົນແຂວງສາລະວັນ ໂດຍການເປັນປະທານຂອງທ່ານ ສີເຮັ່ງ ທອມສົມບັດ ປະທານສະພາປະຊາຊົນແຂວງສາລະວັນ; ເຂົ້າຮ່ວມມີຮອງປະທານສະພາປະຊາຊົນແຂວງ, ມີບັນດາທ່ານຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 14, ຄະນະປະຈຳສະພາປະຊາຊົນແຂວງ, ສະມາຊິກສະພາປະຊາຊົນແຂວງ, ປະທານ-ຮອງປະທານຄະນະກຳມະການ, ຄະນະເລຂາທິການ, ຫ້ອງວ່າການແຂວງ, ບັນດາທ່ານຕາງໜ້າຈາກພະແນກການອ້ອມຂ້າງແຂວງທີ່ກ່ຽວຂ້ອງແລະອົງການລັດທຽບເທົ່າຂັ້ນແຂວງ ຕະຫຼອດຮອດພະນັກງານພາຍໃນສະພາປະຊາຊົນແຂວງເຂົ້າຮ່ວມ.

**(ດີລຳພົນ ພົມມະຈັນ)**

# ຫົວພັນ ທາບທາມກົດໝາຍກຽມນຳເຂົ້າພິຈາລະນາໃນກອງປະຊຸມສະໄໝສາມັນເທື່ອທີ 7 ຂອງ ສພຊ



(ສພຊ) - ເພື່ອເປັນການລະດົມຄຳຄິດເຫັນທີ່ເປັນປະໂຫຍດຂອງສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 8 ແຂວງຫົວພັນ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ (ສສຂ) ແລະ ພາກສ່ວນກ່ຽວຂ້ອງ ໃນການທາບທາມຄຳເຫັນໃສ່ຮ່າງກົດໝາຍ 5 ສະບັບ ໃຫ້ມີເນື້ອໃນຄົບຖ້ວນ, ຮັດກຸມ ແລະ ແທດເໝາະກັບສະພາບຄວາມເປັນຈິງໃນສັງຄົມ ກ່ອນທີ່ຈະນຳໄປພິຈາລະນາ, ຮັບຮອງເອົາຢູ່ກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ທີ່ຈະໄຂຂຶ້ນໃນມໍ່ໆນີ້.

ໃນລະຫວ່າງວັນທີ 2-3 ພຶດສະພາ 2024 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ຫົວພັນ ໄດ້ຈັດກອງປະຊຸມທາບທາມຮ່າງກົດໝາຍ 5 ສະບັບ ທີ່ຕິດພັນກັບ 4 ພາກສ່ວນຄື: ພະແນກສາທາລະນະສຸກແຂວງ, ພະແນກຊັບພະຍາກອນທຳມະຊາດແລະສິ່ງແວດລ້ອມແຂວງ, ພະແນກກະສິກຳ ແລະ ປ່າໄມ້ແຂວງ ແລະ ອົງການກວດກາແຫ່ງລັດແຂວງ ໂດຍການເປັນປະທານຂອງທ່ານ ຄອນປະພັນ ເລືອງສີຈັນທອງ ຮອງປະທານຄະນະ ສສຊ ປະຈຳເຂດເລືອກຕັ້ງທີ 8 ແຂວງຫົວພັນ, ຮອງປະທານ ສພຂ ຫົວພັນ; ເຂົ້າຮ່ວມມີບັນດາທ່ານ ສສຊ ປະຈຳເຂດເລືອກຕັ້ງ, ສສຂ ແລະ ຫົວໜ້າ-ຮອງຫົວໜ້າພະແນກການ, ອົງການທຽບເທົ່າຂັ້ນແຂວງ, ອົງການຈັດຕັ້ງມະຫາຊົນ, ອົງການໄອຍະການ, ສານປະຊາຊົນ ແລະ ກອງບັນຊາການທະຫານ, ກອງບັນຊາການປ້ອງກັນຄວາມສະຫງົບ.

ການທາບທາມຄັ້ງນີ້, ເພື່ອໃຫ້ສອດຄ່ອງກັບກົດໝາຍວ່າດ້ວຍການສ້າງນິຕິກຳ ແລະ ເປັນການຍາດແຍ່ງເອົາຄຳຄິດຄຳເຫັນຂອງເປົ້າໝາຍຕ່າງໆໃນສັງຄົມເພື່ອນຳໄປຄົ້ນຄວ້າປັບປຸງກົດໝາຍເຮັດໃຫ້ກາຍເປັນກົດໝາຍຂອງປະຊາຊົນ, ມາຈາກປະຊາຊົນ ແລະ ຮັບໃຊ້ປະຊາຊົນຢ່າງແທ້ຈິງ.

ໃນກອງປະຊຸມໄດ້ຮັບຟັງການສະເໜີເຫດຜົນ ແລະ ຄວາມຈຳເປັນໃນການສ້າງແລະປັບປຸງຮ່າງກົດໝາຍວ່າດ້ວຍສະຫະກອນ (ສະບັບສ້າງໃໝ່); ກົດໝາຍວ່າດ້ວຍຊັບພະຍາກອນທີ່ເປັນຢາ (ສະບັບສ້າງໃໝ່); ກົດໝາຍວ່າດ້ວຍການຕ້ານສໍ້ລາດບັງຫຼວງ (ສະບັບປັບປຸງ); ກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ (ສະບັບປັບປຸງ) ແລະ ກົດໝາຍວ່າດ້ວຍການກັນ ແລະ ຄວບຄຸມເຊື້ອເອັດຈ໌ໄອວີ/ພະຍາດເອດ (ສະບັບປັບປຸງ). ຈາກນັ້ນ, ບັນດາຜູ້ເຂົ້າຮ່ວມໄດ້ສຸມສະຕິປັນຍາ ເພື່ອຄົ້ນຄວ້າປະກອບຄຳເຫັນຢ່າງກົງໄປກົງມາຕໍ່ແຕ່ລະເນື້ອໃນ, ມາດຕາຂອງ 5 ກົດໝາຍດັ່ງກ່າວ ຢ່າງມີຈຸດສຸມ ເຊິ່ງຈະເປັນຂໍ້ມູນສຳຄັນໃຫ້ແກ່ຄະນະຮັບຜິດຊອບ ນຳໄປຄົ້ນຄວ້າ, ວິເຄາະວິໄຈ, ປັບປຸງກົດໝາຍແຕ່ລະສະບັບເພື່ອເຮັດໃຫ້ກົດໝາຍມີເນື້ອໃນຄົບຖ້ວນ, ຮັດກຸມ ແລະ ສາມາດຈັດຕັ້ງປະຕິບັດໄດ້ດ້ວຍຄຸນນະພາບສູງ.

**(ນາງ ປຸ້ຍນິຕາ ເພັງມີໄຊ)**

# ເພີ່ມທັກສະການເປັນຜູ້ນຳໃຫ້ແກ່ ສສຂ ອຸດົມໄຊ



(ສພຊ) - ເມື່ອເດືອນເມສາຜ່ານມາ, ຢູ່ທີ່ສະໂມສອນເມືອງແບງ ແຂວງອຸດົມໄຊ ສະພາປະຊາຊົນແຂວງ (ສພຂ) ອຸດົມໄຊ ໄດ້ຈັດກອງປະຊຸມສຳມະນາທັກສະການເປັນຜູ້ນຳແລະພາວະຄວາມເປັນຜູ້ນຳ ໃຫ້ແກ່ສະມາຊິກສະພາປະຊາຊົນແຂວງ (ສສຂ) ໂດຍການເປັນປະທານຂອງທ່ານ ຄຳດີ ວົງລ້ອມ ປະທານ ສພຂ ອຸດົມໄຊ; ມີທ່ານ ສຸບັນ ສະວະບຸດ ປະທານກຳມາທິການວຽກງານສະມາຊິກສະພາແຫ່ງຊາດ ເປັນວິທະຍາກອນ, ບັນດາທ່ານຮອງປະທານສພຂ, ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ, ສສຂ ປະຈຳເຂດເລືອກຕັ້ງ 7 ເມືອງ, ຄະນະເລຂາທິການ, ຫົວໜ້າຂະແໜງ ພ້ອມດ້ວຍພະນັກງານວິຊາການ ແລະ ວິທະຍາກອນຈາກພາກສ່ວນກ່ຽວຂ້ອງ ແລະ ເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມໄດ້ຮັບຟັງການສະເໜີບົດລະບອບການປົກຄອງ ແລະ ການບໍລິຫານລັດຢູ່ ສປປ ລາວ; ການຍົກສູງປະສິດທິພາບ, ກົນໄກການບໍລິຫານອົງການ; ການພັດທະນາທັກສະການເປັນຜູ້ບໍລິຫານ ຫຼື ຜູ້ນຳ; ບົດຮຽນການແນະນຳການໃຫ້ຄຳປຶກສາຫາລືກັບປະຊາຊົນຕໍ່ຜູ້ມີສິດເລືອກຕັ້ງຂອງສະມາຊິກສະພາແຫ່ງຊາດແລະສະມາຊິກສະພາປະຊາຊົນຂັ້ນແຂວງ; ຈັນຍາບັນຂອງສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ.

ໂອກາດດັ່ງກ່າວ, ປະທານກອງປະຊຸມໄດ້ມີຄຳເຫັນກ່າວເປີດກອງປະຊຸມແລະທ່ານໄດ້ຮຽກຮ້ອງມາຍັງບັນດາທ່ານຈົ່ງສຸມທຸກສະຕິປັນຍາຂອງທ່ານເຂົ້າໃນການຄົ້ນຄວ້າ, ເຊື່ອມຊຶມ ແລະ ສົນທະນາແລກປ່ຽນຄວາມຄິດເຫັນໃນແຕ່ລະຫົວຂໍ້ຮ່ວມກັນໃຫ້ເປັນຂະບວນຝຶກຝົນແລະສ້າງສັນ, ຮັບປະກັນການສົ່ງ ແລະ ຮັບຄວາມຮູ້ຢ່າງທົ່ວເຖິງ ເພື່ອນຳໄປໝູນໃຊ້ເຂົ້າໃນການຈັດຕັ້ງປະຕິບັດໜ້າທີ່ຂອງຕົນໃນແຕ່ລະໄລຍະ.

**(ນັກຂ່າວ ສພຂ)**

# ຄົ້ນຄວ້າປະກອບຄຳເຫັນໃສ່ຮ່າງ ກົດໝາຍ 5 ສະບັບ ທີ່ຜົ້ງສາລີ




(ສພຊ) - ໃນວັນທີ 2 ພຶດສະພາ 2024 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງຜົ້ງສາລີ ໄດ້ຈັດກອງປະຊຸມຄົ້ນຄວ້າ ແລະ ປະກອບຄຳເຫັນໃສ່ກົດໝາຍ 5 ສະບັບຄື: ກົດໝາຍວ່າດ້ວຍຊັບພະຍາກອນທີ່ເປັນຢາ, ກົດໝາຍວ່າດ້ວຍການກັນ ແລະ ຄວບຄຸມເຊື້ອເອັດໄອວີ/ພະຍາດເອດ, ກົດໝາຍວ່າດ້ວຍການຕ້ານການສໍ້ລາດບັງຫຼວງ, ກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ ແລະ ກົດໝາຍວ່າດ້ວຍສະຫະກອນ ໂດຍການເປັນປະທານຂອງທ່ານ ທຸມເຜັງ ຈອມວິສານ ຮອງປະທານຄະນະປະຈຳສະພາປະຊາຊົນແຂວງ; ເຂົ້າຮ່ວມມີບັນດາທ່ານສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 2 ແຂວງຜົ້ງສາລີ, ສະມາຊິກສະພາປະຊາຊົນແຂວງ, ມີບັນດາຫົວໜ້າ-ຮອງຫົວໜ້າພະແນການ, ອົງການຂັ້ນແຂວງທີ່ກ່ຽວຂ້ອງ, ແລະ ພະນັກງານ-ວິຊາການທີ່ກ່ຽວຂ້ອງຂອງສະພາປະຊາຊົນແຂວງເຂົ້າຮ່ວມ.

ກອງປະຊຸມຄັ້ງນີ້, ກໍເພື່ອເປັນການທາບທາມ, ລະດົມສະຕິປັນຍາ, ຄຳຄິດຄຳເຫັນຂອງສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນແຂວງ ໃນຖານະເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນບັນດາເຜົ່າ ກໍຄືບັນດາເປົ້າໝາຍພາກສ່ວນກ່ຽວຂ້ອງຕ່າງໆຂອງທ້ອງຖິ່ນ ເພື່ອເຮັດໃຫ້ກົດໝາຍ 5 ສະບັບ ມີເນື້ອໃນຄົບຖ້ວນ, ຮັດກຸມແລະແທດເໝາະກັບສະພາບຕົວຈິງ ກ່ອນທີ່ຈະນຳເຂົ້າພິຈາລະນາ, ຮັບຮອງເອົາໃນກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດ ຊຸດທີ IX.

ໃນກອງປະຊຸມໄດ້ຮັບຟັງການລາຍງານຜົນການຄົ້ນຄວ້າ ແລະ ປະກອບຄຳຄິດເຫັນຈາກພະແນການ, ອົງການທີ່ກ່ຽວຂ້ອງ ຄື: ອົງການກວດກາແຂວງ, ພະແນກກະສິກຳ ແລະ ປ່າໄມ້ແຂວງ, ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ, ພະແນກສາທາລະນະສຸກແຂວງ; ຈາກນັ້ນ, ບັນດາຜູ້ເຂົ້າຮ່ວມໄດ້ສຸມສະຕິປັນຍາເພື່ອຄົ້ນຄວ້າປະກອບຄຳເຫັນຕໍ່ແຕ່ລະເນື້ອໃນຂອງແຕ່ລະກົດໝາຍຕາມຄຳຖາມເຈາະຈີ້ມຂອງປະທານກອງປະຊຸມຢ່າງມີຈຸດສຸມ ແລະ ກົງໄປກົງມາ ເຊິ່ງຈະເປັນຂໍ້ມູນສຳຄັນໃຫ້ແກ່ຄະນະຮັບຜິດຊອບ ນຳໄປຄົ້ນຄວ້າ, ວິເຄາະວິໄຈ ປັບປຸງກົດໝາຍແຕ່ລະສະບັບໃຫ້ມີຄວາມຖືກຕ້ອງ, ສອດຄ່ອງ ກັບສະພາບຄວາມເປັນຈິງຂອງທ້ອງຖິ່ນເພື່ອຮັບປະກັນໃຫ້ແກ່ການເຄື່ອນໄຫວຕາມພາລະບົດບາດ ສິດ ແລະ ໜ້າທີ່ຂອງສະມາຊິກສະພາໃນໄລຍະໃໝ່ ສາມາດຈັດຕັ້ງປະຕິບັດວຽກງານໃຫ້ມີປະສິດທິຜົນສູງກວ່າເກົ່າ ແນໃສ່ການຄຸ້ມຄອງລັດ-ຄຸ້ມຄອງສັງຄົມດ້ວຍກົດໝາຍ ມີຄວາມສັກສິດສູງຂຶ້ນ.

**(ສຸນທອງ)**

# ຫາລືການດັດປັບໂຄງສ້າງລາຄາ ນ້ຳປະປາຢູ່ຫຼວງນ້ຳທາ




(ສພຊ) - ເມື່ອບໍ່ດົນມານີ້, ທີ່ຫ້ອງປະຊຸມສະພາປະຊາຊົນແຂວງຫຼວງນ້ຳທາ ໄດ້ເປີດກອງປະຊຸມກ່ຽວກັບການດັດປັບໂຄງສ້າງລາຄານ້ຳປະປາແຂວງຫຼວງນ້ຳທາ ພາຍໃຕ້ການເປັນປະທານຂອງທ່ານ ຄຳຟອງ ອິນມານີ ປະທານສະພາປະຊາຊົນແຂວງຫຼວງນ້ຳທາ; ເຂົ້າຮ່ວມມີທ່ານ ອ່ອນຈັນ ຄຳພາວົງ ຮອງເຈົ້າແຂວງຫຼວງນ້ຳທາ, ມີສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ, ສະມາຊິກສະພາປະຊາຊົນແຂວງ, ຫົວໜ້າ-ຮອງຫົວໜ້າພະແນກການທີ່ກ່ຽວຂ້ອງຂອງແຂວງ ພ້ອມດ້ວຍພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມ 20 ກວ່າຄົນ.

ໃນກອງປະຊຸມ, ທ່ານ ຄຳພອນ ເຕີນຈະເລີນ ປະທານຄະນະກຳມະການເສດຖະກິດ ແຜນການ ແລະ ການເງິນ ສະພາປະຊາຊົນແຂວງຫຼວງນ້ຳທາ ໄດ້ຜ່ານບົດລາຍງານກ່ຽວກັບການຂໍຂຶ້ນລາຄານ້ຳປະປາຂອງລັດວິສາຫະກິດນ້ຳປະປາຂອງແຂວງຫຼວງນ້ຳທາ ເຊິ່ງລັດວິສາຫະກິດນ້ຳປະປາແຂວງ ແມ່ນໄດ້ປະຕິບັດຕາມຂໍ້ຕົກລົງຂອງທ່ານເຈົ້າແຂວງ ສະບັບເລກທີ 769/ຈຂ, ລົງວັນທີ 9 ທັນວາ 2016 ເປັນພື້ນຖານໃນການຄິດໄລ່ລາຄານ້ຳປະປາ ພາຍໃນແຂວງ ແລະ ເຫັນວ່າລາຄານ້ຳປະປາຕາມຂໍ້ຕົກລົງສະບັບນີ້ ບໍ່ສອດຄ່ອງກັບປັດຈຸບັນ ເນື່ອງຈາກໄດ້ຮັບຜົນກະທົບຕໍ່ອັດຕາເງິນເຟີ້ໃນປັດຈຸບັນ, ຄ່າຄອງຊີບສູງ, ນ້ຳມັນເຊື້ອໄຟແພງ, ລາຄາວັດສະດຸອຸປະກອນໃນການຜະລິດນ້ຳປະປາ ມີລາຄາເພີ່ມຂຶ້ນສູງເຮັດໃຫ້ການໃຊ້ຈ່າຍມີການເພີ່ມຂຶ້ນ, ໃນໄລຍະຜ່ານມາລັດວິສາຫະກິດນ້ຳປະປາແຂວງ ໄດ້ເກັບລາຄານ້ຳກັບອົງການຈັດຕັ້ງລັດ ແລະ ປະຊາຊົນແມ່ນຂາດທຶນ, ບໍ່ຄຸ້ມກັບຕົ້ນທຶນໃນການຜະລິດນ້ຳ ດັ່ງນັ້ນ, ລັດວິສາຫະກິດນ້ຳປະປາແຂວງ ຈຶ່ງໄດ້ສະເໜີປັບລາຄານ້ຳປະປາຈາກປີ 2018 ສະເໜີດັດປັບລາຄາຢູ່ໃນປີ 2024 ປະເພດຄົວເຮືອນ 2.828 ກີບ ເພີ່ມຂຶ້ນເປັນ 4.938 ກີບ ເພີ່ມຂຶ້ນ 5%, ອົງການຈັດຕັ້ງລັດຈາກ 5.161 ກີບ ມາເປັນ 8.828 ກີບ ເພີ່ມຂຶ້ນ 5% ແລະ ທຸລະກິດ-ການຄ້າ ຈາກ 6.873 ກີບ ມາເປັນ 10.033 ກີບ ເພີ່ມຂຶ້ນ 5% ແລະ ຈະມີການປັບລາຄານ້ຳເພີ່ມຂຶ້ນແຕ່ລະປີຕາມສະພາບຄວາມເປັນຈິງຂອງເສດຖະກິດ; ພ້ອມດຽວກັນ ຜູ້ແທນກອງປະຊຸມໄດ້ມີຄຳເຫັນແລກປ່ຽນຕໍ່ກັບການເພີ່ມລາຄານ້ຳປະປາຢ່າງມີຈຸດສຸມ ເພື່ອຄວາມເປັນເອກະພາບ ແລະ ສອດຄ່ອງກັບລະບຽບກົດໝາຍ, ລາຄາທີ່ເໝາະສົມຕາມສະພາບຄວາມເປັນຈິງໃນປັດຈຸບັນ.

ຕອນທ້າຍ, ທ່ານ ຄຳຟອງ ອິນມານີ ຍັງໄດ້ສະຫຼຸບບັນດາຄຳເຫັນຂອງຜູ້ແທນກອງປະຊຸມເຫັນໄດ້ວ່າມີຄວາມເປັນເອກະພາບກັນທີ່ຄວນປັບຂຶ້ນລາຄານ້ຳປະປາ ເຊິ່ງມີຄວາມຈຳເປັນແທ້ ເນື່ອງຈາກອຸປະກອນການຜະລິດຕ່າງໆທີ່ນຳໃຊ້ເຂົ້າໃນການຜະລິດນ້ຳມີມູນຄ່າສູງຂຶ້ນ ດັ່ງນັ້ນ, ໃຫ້ພາກສ່ວນທີ່ກ່ຽວຂ້ອງເບິ່ງຄືນບັນດາຫຼັກທີ່ກ່ຽວຂ້ອງ ໃຫ້ສອດຄ່ອງກັບລະບຽບກົດໝາຍທີ່ກ່ຽວຂ້ອງ ພ້ອມທັງຮຽກຮ້ອງໃຫ້ພາກສ່ວນທີ່ກ່ຽວຂ້ອງຮີບຮ້ອນເຮັດບົດລາຍງານລະອຽດ ແລ້ວສົ່ງໃຫ້ສະພາປະຊາຊົນແຂວງ ນຳເຂົ້າໃນກອງປະຊຸມຄະນະປະຈຳສະພາປະຊາຊົນແຂວງ ເພື່ອຄົ້ນຄວ້າ, ພິຈາລະນາ, ຮັບຮອງເອົາ.

**(ນັກຂ່າວ ສພຊ)**

# ສະພາປະຊາຊົນແຂວງບໍ່ແກ້ວ ລະດົມຄຳເຫັນຕໍ່ຮ່າງກົດໝາຍ 5 ສະບັບ

(ສພຊ) - ໂດຍປະຕິບັດຕາມກົດໝາຍວ່າດ້ວຍການສ້າງນິຕິກຳສະບັບປັບປຸງປີ 2021, ປະຕິບັດຕາມແຜນສ້າງ ແລະ ປັບປຸງກົດໝາຍຂອງສະພາແຫ່ງຊາດ ຊຸດທີ IX, ເພື່ອເປັນການລະດົມສະຕິປັນຍາ, ຄຳຄິດເຫັນທີ່ເປັນປະໂຫຍດຂອງສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ, ໃນຖານະເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນບັນດາເຜົ່າ ກໍຄືເປົ້າໝາຍທີ່ກ່ຽວຂ້ອງຕ່າງໆ ໃຫ້ເປັນລະບົບ, ຄົບຖ້ວນ, ຮັດກຸມ ແລະ ສາມາດປະຕິບັດໄດ້ຢ່າງມີປະສິດທິພາບ, ປະສິດທິຜົນ, ແທດເໝາະກັບສະພາບຕົວຈິງກ່ອນທີ່ຈະນຳໄປພິຈາລະນາ, ຮັບຮອງເອົາຢູ່ກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດ.



ໃນວັນທີ 2-3 ພຶດສະພາ 2024 ຢູ່ທີ່ຫ້ອງປະຊຸມສະພາປະຊາຊົນແຂວງບໍ່ແກ້ວ ໂດຍການເປັນປະທານຂອງທ່ານ ຈອມສີ ລັດຕະນະປັນ ປະທານສະພາປະຊາຊົນແຂວງ; ເຂົ້າຮ່ວມມີຮອງປະທານສະພາປະຊາຊົນແຂວງ, ບັນດາທ່ານຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 5 ແຂວງບໍ່ແກ້ວ, ຄະນະປະຈຳສະພາປະຊາຊົນແຂວງ, ສະມາຊິກສະພາປະຊາຊົນແຂວງ, ປະທານ-ຮອງປະທານຄະນະກຳມະການ, ຄະນະເລຂາທິການ, ບັນດາທ່ານຕາງໜ້າຈາກພະແນກການອ້ອມຂ້າງແຂວງທີ່ກ່ຽວຂ້ອງ ແລະ ອົງການລັດທຽບເທົ່າຂັ້ນແຂວງ ຕະຫຼອດຮອດພະນັກງານພາຍໃນສະພາປະຊາຊົນແຂວງ.

ຮ່າງກົດໝາຍທີ່ນຳມາທາບທາມ ປະກອບມີ: ຮ່າງກົດໝາຍວ່າດ້ວຍສະຫະກອນ (ສ້າງໃໝ່), ຮ່າງກົດໝາຍວ່າດ້ວຍຊັບພະຍາກອນທີ່ເປັນຢາ(ສ້າງໃໝ່), ຮ່າງກົດໝາຍວ່າດ້ວຍການຕ້ານການສໍ້ລາດບັງຫຼວງ (ປັບປຸງ), ຮ່າງກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ (ປັບປຸງ) ແລະ ຮ່າງກົດໝາຍ ວ່າດ້ວຍການກັນ ແລະ ຄວບຄຸມເຊື້ອເອັດໄອວີ/ພະຍາດເອດ (ປັບປຸງ) ໄດ້ນຳເຂົ້າກອງປະຊຸມທາບທາມລະດົມຄຳຄິດເຫັນໃສ່ເນື້ອໃນບາງໝວດບາງມາດຕາຢ່າງກວ້າງຂວາງ, ເພື່ອຮັບປະກັນໃຫ້ເນື້ອໃນຂອງຮ່າງກົດໝາຍດັ່ງກ່າວມີເນື້ອໃນທີ່ເໝາະສົມ, ຄົບຖ້ວນ, ຮັດກຸມ ແລະ ສອດຄ່ອງກັບສະພາບການຂະຫຍາຍຕົວຂອງເສດຖະກິດ-ສັງຄົມ ທັງເປັນການສັງລວມຂໍ້ມູນການປະກອບຄຳເຫັນ ເປັນບ່ອນອີງລາຍງານໃຫ້ແກ່ຄະນະປະຈຳສະພາແຫ່ງຊາດ ກ່ອນທີ່ຈະນຳເຂົ້າພິຈາລະນາໃນກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດ ຊຸດທີ IX ທີ່ຈະຈັດຂຶ້ນໃນເດືອນມິຖຸນາ ທີ່ຈະມາເຖິງນີ້; ບັນດາຮ່າງກົດໝາຍເຫຼົ່ານີ້ລ້ວນແຕ່ມີຄວາມຈຳເປັນທີ່ຕ້ອງສ້າງໃໝ່ ແລະ ປັບປຸງໃນສະພາບການເສດຖະກິດ-ສັງຄົມ ໃນປັດຈຸບັນ ແລະ ມີການກວດກາປະເມີນຄືນ, ຖອດຖອນບົດຮຽນເອກະພາບກັນປັບປຸງກົດໝາຍທີ່ຍັງບໍ່ທັນແທດເໝາະໃຫ້ດີຂຶ້ນກວ່າເກົ່າ ແນໃສ່ເຮັດໃຫ້ການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມດ້ວຍກົດໝາຍມີຜົນສັກສິດ ແລະ ເຂັ້ມງວດ ໂດຍການປະກອບສ່ວນເຂົ້າໃນການສ້າງລັດດ້ວຍກົດໝາຍຂອງປະຊາຊົນ, ໂດຍປະຊາຊົນ ແລະ ເພື່ອຜົນປະໂຫຍດຂອງປະຊາຊົນຢ່າງແທ້ຈິງ.

# ກອງປະຊຸມຕິດຕາມກວດກາການປະຕິບັດ ຄຳຕັດສິນຂອງສານ ຢູ່ແຂວງຫຼວງນ້ຳທາ



(ສພຊ) - ຕອນເຊົ້າວັນທີ 2 ພຶດສະພາ 2024 ທີ່ຫ້ອງປະຊຸມຂອງສະພາປະຊາຊົນແຂວງຫຼວງນ້ຳທາ ໄດ້ເປີດກອງປະຊຸມຕິດຕາມກວດກາການປະຕິບັດຄຳຕັດສິນຂອງສານ ໂດຍການເປັນປະທານຂອງທ່ານ ກົງເພັດ ແກ້ວບົວພາ ຮອງປະທານສະພາປະຊາຊົນແຂວງ;ເຂົ້າຮ່ວມມີບັນດາທ່ານຫົວໜ້າ-ຮອງຫົວໜ້າພະແນກຍຸຕິທຳ, ສານປະຊາຊົນແຂວງ, ອົງການໄອຍະການປະຊາຊົນແຂວງ, ພະແນກການເງິນແຂວງ, ສອງກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ສະພາປະຊາຊົນແຂວງ ພ້ອມດ້ວຍພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມຢ່າງພ້ອມພຽງ.

ໃນກອງປະຊຸມໄດ້ຮັບຟັງການລາຍງານວຽກງານການປະຕິບັດຄຳຕັດສິນຂອງສານ ເຊິ່ງວຽກງານປະຕິບັດຄຳຕັດສິນຂອງສານ ແມ່ນວຽກງານໜຶ່ງທີ່ມີຄວາມສຳຄັນຢູ່ໃນລະບົບຍຸຕິທຳ, ແມ່ນຂອດສຸດທ້າຍຂອງຂະບວນການດຳເນີນຄະດີ ເຊິ່ງໄດ້ກຳນົດໄວ້ໃນມາດຕາ2ຂອງກົດໝາຍວ່າດ້ວຍການປະຕິບັດຄຳຕັດສິນຂອງສານ (ສະບັບປັບປຸງ) ປີ 2021 ແລະ ແມ່ນການນຳເອົາຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ, ຄຳພິພາກສາຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ ແລະ ນິຕິກຳອື່ນຕາມທີ່ໄດ້ກຳນົດໄວ້ໃນມາດຕາ 9 ຂອງກົດໝາຍສະບັບນີ້ ມາຈັດຕັ້ງປະຕິບັດໃຫ້ຖືກຕ້ອງ ແລະ ປາກົດຜົນເປັນຈິງ ເພື່ອຟື້ນຟູສິດ ແລະ ຜົນປະໂຫຍດຂອງລັດ, ລວມໝູ່ ແລະ ພົນລະເມືອງທີ່ຖືກລະເມີດ ຫຼື ສູນເສຍໄປ; ການປະຕິບັດຄຳຕັດສິນຂອງສານໃນໄລຍະ 1 ປີຜ່ານມາ ແມ່ນໄດ້ດຳເນີນການປະຕິບັດຄຳຕັດສິນຂອງສານເຊິ່ງມີຜົນສຳເລັດດັ່ງນີ້: ຄະດີຄ້າງມາ1.214 ເລື່ອງ, ແພ່ງ 114 ເລື່ອງ, ການຄ້າ 29 ເລື່ອງ, ຄອບຄົວ 36 ເລື່ອງ, ແມ່ຍິງ-ເດັກ 08 ເລື່ອງ, ອາຍາເສບຕິດ 653 ເລື່ອງ, ອາຍາທົ່ວໄປ 364 ເລື່ອງ ແລະ ອື່ນໆ 10 ເລື່ອງ;ໂຈະຄ້າງມາ 28 ເລື່ອງ, ແພ່ງ 08 ເລື່ອງ, ຄອບຄົວ 03 ເລື່ອງ, ແມ່ຍິງ-ເດັກ 02 ເລື່ອງ, ອາຍາທົ່ວໄປ 13 ເລື່ອງ ແລະ ອື່ນໆ ຄະດີເຂົ້າໃໝ່ 217 ເລື່ອງ, ແພ່ງ 26 ເລື່ອງ, ຄອບຄົວ 12 ເລື່ອງ, ອາຍາເສບຕິດ 123 ເລື່ອງ ແລະ ອາຍາທົ່ວໄປ 56 ເລື່ອງ; ປະຕິບັດສຳເລັດ 65 ເລື່ອງ, ແພ່ງ 17 ເລື່ອງ, ການຄ້າ 01 ເລື່ອງ, ຄອບຄົວ 10 ເລື່ອງ, ອາຍາຢາເສບຕິດ 18 ເລື່ອງ, ອາຍາ ທົ່ວໄປ 17 ເລື່ອງ ແລະ ອື່ນໆ 02 ເລື່ອງ; ອອກຄຳສັ່ງໂຈະ 22 ເລື່ອງ, ແພ່ງ 02 ເລື່ອງ, ອາຍາຢາເສບຕິດ 15 ເລື່ອງ ແລະ ອາຍາທົ່ວໄປ 05 ເລື່ອງ; ສົ່ງໃຫ້ອົງການປະຕິບັດຄຳຕັດສິນຕ່າງແຂວງ 31 ເລື່ອງ, ແພ່ງ 04 ເລື່ອງ, ຄອບຄົວ 04 ເລື່ອງ, ອາຍາຢາເສບຕິດ 17 ເລື່ອງ ແລະ ອາຍາທົ່ວໄປ 06 ເລື່ອງ; ກຳລັງປະຕິບັດ 1.291 ເລື່ອງ, ແພ່ງ 115 ເລື່ອງ, ການຄ້າ 28 ເລື່ອງ, ຄອບຄົວ 34 ເລື່ອງ, ແມ່ຍິງ-ເດັກ 08 ເລື່ອງ, ອາຍາ ຢາເສບຕິດ 711 ເລື່ອງ, ອາຍາທົ່ວໄປ 387 ເລື່ອງ ແລະ ອື່ນໆ 08 ເລື່ອງ; ນອກນີ້, ໂຈະປະຕິບັດໄວ້ ແພ່ງ 10 ເລື່ອງ, ຄອບຄົວ 03 ເລື່ອງ, ແມ່ຍິງ-ເດັກ 02 ເລື່ອງ, ອາຍາຢາເສບຕິດ 15 ເລື່ອງ, ອາຍາທົ່ວໄປ 18 ເລື່ອງ ແລະ ອື່ນໆ 02 ເລື່ອງ.

ໃນໂອກາດນີ້, ຜູ້ແທນກອງປະຊຸມໄດ້ພ້ອມກັນປະກອບຄຳເຫັນໃສ່ບົດລາຍງານດັ່ງກ່າວຢ່າງກົງໄປກົງມາ ເພື່ອເຮັດໃຫ້ວຽກງານດັ່ງກ່າວນັບມື້ມີປະສິດທິພາບດີຂຶ້ນເລື້ອຍໆ.

**(ນາງ ອຳພອນ ສີປະເສີດ)**

# ສພຂ ສະຫວັນນະເຂດ ທາບທາມກົດໝາຍ 5 ສະບັບ



(ສພຂ) - ເພື່ອເຮັດໃຫ້ແຜນການສ້າງ ແລະ ປັບປຸງກົດໝາຍ ປະຈຳປີ 2024 ໃນຈຳນວນ 26 ສະບັບ ໃນນັ້ນ, ສະບັບສ້າງໃໝ່ 8 ສະບັບ ແລະ ປັບປຸງ 18 ສະບັບ ສຳເລັດຕາມເປົ້າໝາຍທີ່ວາງໄວ້, ໃນລະຫວ່າງວັນທີ06-07 ພຶດສະພາ 2024 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ສະຫວັນນະເຂດ ໄດ້ຈັດກອງປະຊຸມທາບທາມຄຳຄິດເຫັນໃສ່ຮ່າງປັບປຸງກົດໝາຍ 5ສະບັບເພື່ອນຳເຂົ້າພິຈາລະນາຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ7 ຂອງສະພາແຫ່ງຊາດ ຊຸດທີ IX ໂດຍການເປັນປະທານຂອງທ່ານ ກົງແກ້ວ ມີວໍລະຈັກປະທານສະພາປະຊາຊົນແຂວງ; ມີບັນດາທ່ານສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 13 ແຂວງສະຫວັນນະເຂດ, ສະມາຊິກສະພາປະຊາຊົນແຂວງປະຈຳເຂດເລືອກຕັ້ງເມືອງ-ນະຄອນ, ອົງການຈັດຕັ້ງມະຫາຊົນ, ຜູ້ຕາງໜ້າຈາກພະແນກການທີ່ກ່ຽວຂ້ອງກັບຮ່າງກົດໝາຍພ້ອມດ້ວຍພະນັກງານ-ລັດຖະກອນສພຂເຂົ້າຮ່ວມທັງໝົດ 40 ທ່ານ ຍິງ 12 ທ່ານ.

ໃນກອງປະຊຸມ, ຄະນະຮັບຜິດຊອບໄດ້ຂຶ້ນສະເໜີຮ່າງກົດໝາຍ 5 ສະບັບຄື: ຮ່າງກົດໝາຍວ່າດ້ວຍສະຫະກອນ (ສະບັບສ້າງໃໝ່); ຮ່າງກົດໝາຍວ່າດ້ວຍການຕ້ານການສໍ້ລາດບັງຫຼວງ (ສະບັບປັບປຸງ); ຮ່າງກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ (ສະບັບປັບປຸງ); ຮ່າງກົດໝາຍວ່າດ້ວຍການກັນ ແລະ ຄວບຄຸມເຊື້ອເອັດໄອວີ/ພະຍາດເອດ (ສະບັບປັບປຸງ) ແລະ ຮ່າງກົດໝາຍວ່າດ້ວຍຊັບພະຍາກອນທີ່ເປັນຢາ (ສະບັບສ້າງໃໝ່) ເຊິ່ງທັງ 5 ກົດໝາຍທີ່ນຳມາທາບທາມໃນຄັ້ງນີ້ ມີຄວາມສຳຄັນຕໍ່ກັບການຂະຫຍາຍຕົວຂອງເສດຖະກິດ-ສັງຄົມໃນປັດຈຸບັນ ເພື່ອໃຫ້ກົດໝາຍດັ່ງກ່າວ ມີປະສິດທິພາບ ແລະ ປະສິດທິຜົນສູງຂຶ້ນກວ່າເກົ່າ ແນໃສ່ການຄຸ້ມຄອງລັດ, ຄຸ້ມຄອງສັງຄົມດ້ວຍກົດໝາຍ.

ພ້ອມດຽວກັນນີ້, ຜູ້ແທນກອງປະຊຸມຄົ້ນຄວ້າ ແລກປ່ຽນຄຳຄິດຄຳເຫັນ, ຢ່າງມີຈຸດສຸມສອດຄ່ອງກັບສະພາບຕົວຈິງ ເຊິ່ງໃນໄລຍະກອງປະຊຸມມີຜູ້ແທນປະກອບຄຳເຫັນທັງໝົດ 30 ເທື່ອທ່ານ ຍິງ 12 ເທື່ອທ່ານ ເຫັນໄດ້ເຖິງຄວາມເອົາໃຈໃສ່ ແລະເປັນເຈົ້າການຂອງບັນທ່ານ ສສຊ ແລະ ສສຂ, ບັນດາທ່ານຜູ້ແທນກອງປະຊຸມ ໃນການຄົ້ນຄວ້າປະກອບຄຳເຫັນຕໍ່ບັນດາເນື້ອໃນຮ່າງກົດໝາຍ ດ້ວຍລັກສະນະສ້າງສັນ, ຢ່າງຖີ່ຖ້ວນ ແລະ ເລິກເຊິ່ງ ດ້ວຍຄວາມຮັບຜິດຊອບສູງ ຈຶ່ງເຮັດໃຫ້ກອງປະຊຸມໄດ້ສິ້ນສຸດລົງດ້ວຍຜົນສຳເລັດຢ່າງຈົບງາມ.

**(ນັກຂ່າວ ສພຂ)**

# ສປນວ ພົບປະ ແລະ ເຮັດວຽກກັບຄະນະຜູ້ແທນ ສະພາປະຊາຊົນນະຄອນຫຼວງອູລານບາຕໍ

(ສພຊ) - ໃນເດືອນເມສາຜ່ານມາ, ທ່ານ ນາງ ລຳພອຍ ສີອັກຄະຈັນ ຮອງປະທານສະພາປະຊາຊົນນະຄອນຫຼວງວຽງຈັນ (ສປນວ) ພ້ອມດ້ວຍຄະນະ ໄດ້ເດີນທາງໄປຢ້ຽມຢາມພົບປະ ແລະ ເຮັດວຽກກັບຄະນະຜູ້ແທນສະພາຜູ້ແທນປະຊາຊົນນະຄອນຫຼວງອູລານບາຕໍ ແຫ່ງ ມົງໂກລີ ເພື່ອແລກປ່ຽນບົດຮຽນດ້ານວຽກງານການຕິດຕາມກວດກາການຈັດຕັ້ງປະຕິບັດພາລະບົດຂອງສະພາປະຊາຊົນຂັ້ນທ້ອງຖິ່ນ ແລະປຶກສາຫາລືເນື້ອໃນສຳຄັນຕົ້ນຕໍຕໍ່ຮ່າງບົດບັນທຶກການຮ່ວມມື (MoC) ລະຫວ່າງສອງສະພາປະຊາຊົນຂັ້ນທ້ອງຖິ່ນ.

ໃນການຢ້ຽມຢາມຄັ້ງນີ້, ຄະນະຜູ້ແທນສະພາປະຊາຊົນນະຄອນຫຼວງວຽງຈັນ ໄດ້ເຂົ້າຢ້ຽມຂ່ຳນັບທ່ານ ຈ. ບັດບາຢາສ໌ກາລັງ ປະທານສະພາຜູ້ແທນປະຊາຊົນນະຄອນຫຼວງອູລານບາຕໍ ເຊິ່ງໃນການຢ້ຽມຂ່ຳນັບ, ທ່ານ ນາງ ລຳພອຍ ສີອັກຄະຈັນ ໄດ້ລາຍງານ ແລະ ແລກປ່ຽນບົດຮຽນດ້ານສະພາບການພັດທະນາເສດຖະກິດ-ສັງຄົມ, ການເຄື່ອນໄຫວວຽກງານ ແລະ ຂໍ້ມູນດ້ານໂຄງປະກອບການຈັດຕັ້ງຂອງສອງນະຄອນຫຼວງ ກໍຄືສອງສະພາປະຊາຊົນຂັ້ນທ້ອງຖິ່ນ ແລະ ປຶກສາຫາລືກ່ຽວກັບຮ່າງບົດບັນທຶກການຮ່ວມມື ເຊິ່ງທັງສອງຝ່າຍກໍໄດ້ເຫັນດີເປັນເອກະພາບສູງຕໍ່ດ້ານຫຼັກການ ແລະ ເນື້ອໃນຂອງຮ່າງບົດບັນທຶກດັ່ງກ່າວ.



ນອກຈາກນີ້, ຄະນະຜູ້ແທນສະພາປະຊາຊົນນະຄອນຫຼວງວຽງຈັນຍັງໄດ້ເຂົ້າຢ້ຽມຂ່ຳນັບທ່ານ ນາງ ສ. ອອດຕອງໂທຢາ ຮອງປະທານສະພາຕູຣານໃຫຍ່ ແຫ່ງມົງໂກລີ, ຢ້ຽມຢາມທ່ານ ແພງສະຫວັນ ແກ້ວປະເສີດ ເອກອັກຄະລັດຖະທູດ ສປປລາວ ປະຈຳມົງໂກລີ ແລະ ຍັງໄດ້ໄປຢ້ຽມຢາມສະຖານທີ່ສຳຄັນຕ່າງໆຂອງນະຄອນຫຼວງອູລານບາຕໍ ເປັນຕົ້ນແມ່ນຫໍພິພິທະພັນຈິງກິສຄານ, ໂຮງງານຜະລິດຜ້າພົມ, ໂຮງງານຜະລິດເສື້ອຜ້າຈາກຂົນແບ້.

# ກບຜ ຕິດຕາມກວດກາໂຄງການຈຸດສຸມວຽກງານ ພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ



(ສພຊ) - ລະຫວ່າງວັນທີ 23-25 ເມສາ 2024 ທ່ານ ແກ້ວຈະເລີນ ເຊ່ຍຢົ້ງຢ່າງ ຮອງປະທານກຳມາທິການບັນດາເຜົ່າ (ກບຜ) ພ້ອມດ້ວຍຄະນະຮ່ວມກັບສະພາປະຊາຊົນແຂວງໄຊຍະບູລີ ໄດ້ເຄື່ອນໄຫວຕິດຕາມກວດກາບັນດາໂຄງການຈຸດສຸມວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ທີ່ພົວພັນກັບການດຳລົງຊີວິດຂອງປະຊາຊົນບັນດາເຜົ່າຢູ່ແຂວງໄຊຍະບູລີ; ທັງນີ້, ກໍເພື່ອຕິດຕາມກວດກາການຈັດຕັ້ງປະຕິບັດກົດໝາຍ, ນິຕິກຳໃຕ້ກົດໝາຍຂອງບັນດາຂະແໜງການ ແລະ ອົງການກ່ຽວຂ້ອງກັບກຳມາທິການບັນດາເຜົ່າ; ການຈັດຕັ້ງປະຕິບັດວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ, ສ້າງບ້ານພັດທະນາ ຕິດພັນກັບວຽກງານ 3 ສ້າງ, ໂຄງການລົງທຶນ ແລະ ການພັດທະນາທີ່ມີຜົນກະທົບຕໍ່ປະຊາຊົນບັນດາເຜົ່າ ທັງເປັນການເກັບກຳຂໍ້ມູນຕົວຈິງຕາມຄຳຮ້ອງ, ຄຳສະເໜີຂອງປະຊາຊົນ.

ໂອກາດດັ່ງກ່າວ, ຄະນະໄດ້ເຮັດວຽກຮ່ວມກັບສະພາປະຊາຊົນແຂວງ ຮັບຟັງການລາຍງານຫຍໍ້ຈາກບັນດາພະແນກການຂອງແຂວງ ກ່ຽວກັບວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ, ວຽກງານແນວລາວສ້າງຊາດ, ວຽກງານອົງການຈັດຕັ້ງມະຫາຊົນ, ວຽກງານພາຍໃນ, ວຽກງານປ້ອງກັນຄວາມສະຫງົບ, ການລົງທຶນຂອງທະນາຄານນະໂຍບາຍຂອງແຂວງ ແລະ ອື່ນໆ; ພ້ອມດຽວກັນນັ້ນ, ຮອງປະທານ ກບຜ ກໍໄດ້ເນັ້ນໃຫ້ເອົາໃຈໃສ່ຕື່ມບາງບັນຫາ ເຊັ່ນ: ການຈັດຕັ້ງປະຕິບັດວຽກງານພັດທະພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກທີ່ນອນໃນຂໍ້ຕົກລົງຂອງນາຍົກລັດຖະມົນຕີ ສະບັບເລກທີ 72/ນຍ, ມະຕິກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 82/ສພຊ, ດຳລັດ 348/ລບ ແລະ ກົດໝາຍວ່າດ້ວຍການຈັດສັນພູມລຳເນົາ ແລະ ອາຊີບຄົງທີ່ ສະບັບເລກທີ 45/ສພຊ, ວຽກງານຕໍ່ຕ້ານແລະສະກັດກັ້ນຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກນ້ອຍ, ວຽກງານພາຍໃນ ຕາມດຳລັດ 315/ລບ, ການຄຸ້ມຄອງການເຂົ້າ-ອອກຂອງພົນລະເມືອງ, ການຄຸ້ມຄອງໂຄງການຊ່ວຍເຫຼືອລ້າ, ການຄຸ້ມຄອງຄົນຕ່າງດ້າວ ແລະ ບັນຫາແຮງງານເຄື່ອນຍ້າຍ ແລະ ທຸກຫົວຂໍ້ທີ່ນອນໃນມະຕິຂອງກອງປະຊຸມສະພາແຫ່ງຊາດ ສະບັບ 118/ສພຊ.

ຈາກນັ້ນ, ຄະນະຍັງໄດ້ເຄື່ອນໄຫວພົບປະ ແລະ ເຮັດວຽກ ຢູ່ຈຸດບ້ານປາກເປັດ, ຈຸດບ້ານຫ້ວຍຄູນ, ບ້ານທົ່ງກາບ, ບ້ານແກ່ສີພົມ ເມືອງຊຽງຮ່ອນ ແລະ ຈຸດບ້ານທອງ ເມືອງເງິນ ອີກດ້ວຍ.

**(ອິນທີ ຊຽວສີຟ້າ)**

# ອົບຮົມສ້າງຄວາມເຂັ້ມແຂງ ໃຫ້ແກ່ ສສຊ ແລະ ສສຂ ຫົວພັນ



(ສພຊ) - ທ້າຍເດືອນເມສາ 2024 ສະພາປະຊາຊົນແຂວງຫົວພັນໄດ້ຈັດກອງປະຊຸມເຝິກອົບຮົມທັກສະການຕິດຕາມກວດກາ ແລະ ປະເມີນການຈັດຕັ້ງປະຕິບັດນິຕິກຳໃຕ້ກົດໝາຍ, ກົດໝາຍໃນຂົງເຂດວັດທະນະທຳ-ສັງຄົມ ໃຫ້ແກ່ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງ ແລະ ສະມາຊິກສະພາປະຊາຊົນແຂວງ (ສສຂ) ຫົວພັນ ຂຶ້ນຢູ່ທີ່ຫ້ອງປະຊຸມ ເມືອງຮ້ຽມ ແຂວງຫົວພັນ ໂດຍການເປັນປະທານຂອງ ທ່ານ ຄອນປະພັນ ເລືອງສີຈັນທອງ ຮອງປະທານສະພາປະຊາຊົນແຂວງ (ສພຂ), ບັນດາທ່ານ, ວິທະຍາກອນ, ສຳມະນາກອນທີ່ເປັນ ສສຊ ແລະ ສສຂ ປະຈຳເຂດເລືອກຕັ້ງເມືອງ 10 ເມືອງທົ່ວແຂວງ ຕະຫຼອດຮອດວິຊາການ ສະພາປະຊາຊົນແຂວງ ທີ່ກ່ຽວຂ້ອງເຂົ້າຮ່ວມ.

ກອງປະຊຸມຄັ້ງນີ້ ແມ່ນເພື່ອຍົກສູງຂີດຄວາມສາມາດ ແລະທັກສະສ້າງຄວາມເຂັ້ມແຂງ ແລະ ຍົກລະດັບໃຫ້ແກ່ ສສຊ ປະຈຳເຂດເລືອກຕັ້ງ ແລະ ສສຂ ໃນການຈັດຕັ້ງປະຕິບັດວຽກງານຕາມພາລະບົດບາດຂອງຕົນ ທັງເປັນການແລກປ່ຽນປະສົບການ ແລະ ບົດຮຽນເຊິ່ງກັນແລະກັນ ໃນການປະຕິບັດໜ້າທີ່ວຽກງານຕົວຈິງ, ເພື່ອເຮັດໃຫ້ ສສຊ ແລະ ສສຂ ມີທັກສະ ແລະ ສາມາດເຄື່ອນໄຫວວຽກງານມີປະສິດພາບ ແລະ ປະສິດທິຜົນດີຂຶ້ນ ເຊິ່ງກອງປະຊຸມໄດ້ຮັບການສະໜັບສະໜູນຈາກໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດ ແລະ ສະພາປະຊາຊົນ (STEPs).

ກອງປະຊຸມຮັບຟັງການສະເໜີເອກະສານໃນ ຈຳນວນ 2 ຫົວຂໍ້ຄື: ທັກສະໃນການຕິດຕາມກວດການິຕິກຳໃຕ້ກົດໝາຍ, ບາງບົດຮຽນ ແລະ ພຶດຕິກຳຕົວຈິງໃນການຕິດຕາມການສ້າງນິຕິກຳໃຕ້ກົດໝາຍຂອງສະພາປະຊາຊົນແຂວງແລະບົດຮຽນການປະເມີນນິຕິກຳໃຕ້ກົດໝາຍ ທີ່ສະພາປະຊາຊົນແຂວງ ພິຈາລະນາ ແລະ ຮັບຮອງເອົາ; ພ້ອມດຽວກັນນັ້ນ, ຜູ້ເຂົ້າຮ່ວມຍັງໄດ້ພ້ອມກັນສົນທະນາປະກອບຄຳຄິດຄຳເຫັນຢ່າງກົງໄປກົງມາ, ແລກປ່ຽນບົດຮຽນເຊິ່ງກັນແລະກັນຕໍ່ກັບບັນດາເນື້ອໃນກອງປະຊຸມເຝິກອົບຮົມໃຫ້ມີຄວາມຮັບຮູ້, ເຂົ້າໃຈເລິກເຊິ່ງ ເພື່ອຄວາມເປັນເອກະພາບສູງກ້າວໄປເຖິງໃຫ້ສາມາດນຳໄປຈັດຕັ້ງປະຕິບັດໃນການໂຄສະນາເຜີຍແຜ່ພົບປະຜູ້ມີສິດເລືອກຕັ້ງໃຫ້ມີຜົນສຳເລັດຕາມຈຸດປະສົງລະດັບຄາດໝາຍທີ່ວາງໄວ້.

ຕອນທ້າຍ, ປະທານກອງປະຊຸມໄດ້ມີຄຳຄິດຄຳເຫັນ ພ້ອມທັງເນັ້ນໜັກໃຫ້ ສສຊ ແລະ ສສຂ ປະຈຳເຂດເລືອກຕັ້ງ 10 ເມືອງພ້ອມດ້ວຍວິຊາການທີ່ກ່ຽວຂ້ອງຈົ່ງພ້ອມກັນນຳເອົາທັກສະ, ຄວາມຮູ້, ຄວາມສາມາດ, ຄວາມເຂົ້າໃຈ ແລະ ວິທີການດັ່ງກ່າວ ຕາມເນື້ອໃນຈິດໃຈຂອງກອງປະຊຸມຝຶກອົບຮົມຄັ້ງນີ້ນຳໄປຈັດຕັ້ງປະຕິບັດໃຫ້ປະກົດຜົນເປັນຈິງ; ຕ້ອງໄດ້ຍົກສູງຄວາມຮັບຜິດຊອບ, ຄວາມເປັນເຈົ້າການເພື່ອນຳເອົາບົດຮຽນການຝຶກອົບຮົມໃນຄັ້ງນີ້ໄປຈັດຕັ້ງປະຕິບັດຕາມພາລະບົດບາດ ສິດ ແລະໜ້າທີ່ຂອງຕົນໃຫ້ຖືກຕ້ອງ, ສອດຄ່ອງຕາມລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍທີ່ໄດ້ກຳນົດໄວ້, ໂດຍສະເພາະວຽກງານຕິດຕາມກວດກາຖືວ່າເປັນວຽກງານໜຶ່ງທີ່ສຳຄັນຢ່າງຍິ່ງໃນການຄຸ້ມຄອງເສດຖະກິດ-ສັງຄົມໃຫ້ມີຄວາມເປັນລະບຽບຮຽບຮ້ອຍ; ເອົາໃຈໃສ່ໃນການຄົ້ນຄ້ວາເກັບກຳຂໍ້ມູນ, ວິເຄາະ, ວິໄຈບັນຫາໃຫ້ລະອຽດຈະແຈ້ງ, ຈະແຈ້ງເພື່ອເປັນຂໍ້ມູນພື້ນຖານ, ເປັນບ່ອນອີງໃຫ້ແກ່ການປະກອບຄຳເຫັນ ແລະ ການຊັກຖາມຢູ່ໃນກອງປະຊຸມສະພາ, ເຮັດໃຫ້ການປະກອບຄຳເຫັນ, ຂໍ້ຊັກຖາມດັ່ງກ່າວຖືກຕ້ອງຖືກປະເດັນ ແລະ ຮັບປະກັນດ້ານຄຸນນະພາບໃນການຕັ້ງບັນຫາຂໍ້ຊັກຖາມຕ່າງໆທີ່ຈະໃຫ້ຂະແໜງການກ່ຽວຂ້ອງອະທິບາຍຊີ້ແຈ້ງບັນຫາທີ່ປະຊາຊົນ ແລະ ສັງຄົມໃຫ້ຄວາມສົນໃຈຫຼາຍ, ເພື່ອຈະນຳເອົາຄຳອະທິບາຍຂອງຂະແໜງການກ່ຽວຂ້ອງໄປເຜີຍແຜ່ອະທິບາຍຊີ້ແຈ້ງຕໍ່ປະຊາຊົນໄດ້ຮັບຮູ້, ເຂົ້າໃຈ ແລະ ມີຄວາມເປັນເອກະພາບ; ຕ້ອງໄດ້ເອົາໃຈໃສ່ ແລະ ໃຫ້ຄວາມສຳຄັນໃນເວລາລົງພົບປະຜູ້ມີສິດເລືອກຕັ້ງຢູ່ແຕ່ລະຂົງເຂດຕ່າງໆແມ່ນໃຫ້ຖືເອົາວຽກງານນີ້ຕິດພັນໄປນຳເນື້ອໃນບັນດາມະຕິກອງປະຊຸມສະພາປະຊາຊົນແຂວງ ເພື່ອລົງໂຄສະນາເຜີຍແຜ່ອະທິບາຍ, ຊີ້ແຈງໃຫ້ປະຊາຊົນໄດ້ຮັບຮູ້ເຂົ້າໃຈໃນນາມເປັນຕົວແທນໃຫ້ແກ່ປະຊາຊົນ.

**(ສພຂ ຫົວພັນ)**

# ສະພາປະຊາຊົນ 4 ແຂວງພາກເໜືອ ແລກປ່ຽນບົດຮຽນຮ່ວມກັນ



(ສພຊ) - ທ້າຍເດືອນເມສາ 2024 ຢູ່ທີ່ສະໂມສອນຫ້ອງວ່າການເມືອງຄຳ ແຂວງຊຽງຂວາງ ໄດ້ເປີດກອງປະຊຸມສຳມະນາແລກປ່ຽນບົດຮຽນວຽກງານຄະນະເລຂາທິການສະພາປະຊາຊົນແຂວງ ລະຫວ່າງແຂວງຊຽງຂວາງ, ຫົວພັນ, ໄຊສົມບູນ ແລະ ບໍລິຄຳໄຊ ພາຍໃຕ້ການເປັນປະທານຮ່ວມຂອງທ່ານບຸນໂຮມ ເທດທານີ ປະທານສະພາປະຊາຊົນແຂວງຊຽງຂວາງ ແລະ ບັນດາທ່ານປະທານ-ຮອງປະທານສະພາປະຊາຊົນແຂວງຂອງ 4 ແຂວງດັ່ງກ່າວ, ມີບັນດາທ່ານຄະນະປະຈຳ, ຄະນະເລຂາທິການ, ຫົວໜ້າ-ຮອງຫົວໜ້າຂະແໜງ ແລະ ພະນັກງານຂອງສະພາປະຊາຊົນແຂວງ 4 ແຂວງເຂົ້າຮ່ວມ.

ໃນວາລະກອງປະຊຸມ, ບັນດາທ່ານຄະນະເລຂາທິການສະພາປະຊາຊົນແຂວງ ໄດ້ຂຶ້ນລາຍງານການຈັດຕັ້ງປະຕິບັດວຽກງານຂອງຕົນ ໃນໄລຍະຜ່ານມາໃຫ້ທີ່ປະຊຸມໄດ້ຮັບຟັງ; ຈາກນັ້ນ, ຜູ້ເຂົ້າຮ່ວມໄດ້ມີຄຳຄິດຄຳເຫັນແລກປ່ຽນເຊິ່ງກັນແລະກັນຢ່າງກົງໄປກົງມາ ເປັນຕົ້ນແມ່ນການຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຄະນະເລຂາທິການສະພາປະຊາຊົນແຂວງ ມີຂໍ້ສະດວກ ແລະຂໍ້ຫຍຸ້ງຍາກຄືແນວໃດເປັນຕົ້ນແມ່ນວຽກງານຄົ້ນຄວ້າ-ສັງລວມເນື້ອໃນ, ການຄຸ້ມຄອງວຽກງານບໍລິຫານ, ແຜນການ, ການເງິນ ແລະ ການຄຸ້ມຄອງວຽກງານຈັດຕັ້ງ-ພະນັກງານ, ວຽກງານການພົວພັນປະສານງານກັບອົງການປົກຄອງແຂວງ, ສະພາປະຊາຊົນແຂວງ ແລະ ຄະນະສະມາຊິກສະພາປະຊາຊົນແຂວງປະຈຳເຂດເລືອກຕັ້ງເມືອງ, ການເປັນເສນາທິການໃຫ້ແກ່ການກະກຽມວຽກງານປີ່ນອ້ອມກ່ອນການເປີດກອງປະຊຸມສະໄໝສາມັນແຕ່ລະຄັ້ງຂອງສະພາປະຊາຊົນແຂວງ, ການເປັນເສນາທິການທີ່ດີໃຫ້ແກ່ສະພາປະຊາຊົນແຂວງ, ຄະນະປະຈຳສະພາປະຊາຊົນແຂວງ ແລະ ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ.

ໃນຕອນທ້າຍ, ທ່ານ ບຸນໂຮມ ເທດທານີ ໄດ້ມີຄຳເຫັນ ເຊິ່ງກອງປະຊຸມເປັນກອງປະຊຸມທີ່ຄວາມສຳຄັນຫຼາຍ ໄດ້ມີໂອກາດແລກປ່ຽນບົດຮຽນ, ປະສົບການໃນການຈັດຕັ້ງປະຕິບັດວຽກງານທີ່ຜ່ານມາເຫັນວ່າມີອັນດີຫຼາຍຢ່າງ, ໃຫ້ບັນດາທ່ານນຳເອົາເນື້ອໃນທີ່ນຳເອົາມາແລກປ່ຽນໃນຄັ້ງນີ້ນຳໄປຜັນຂະຫຍາຍເຂົ້າໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານຕົວຈິງຂອງຕົນໃຫ້ໄດ້ຮັບຜົນສຳເລັດ ແລະ ເປັນເອກະພາບກັນໃນທຸກວຽກງານ.

ກອງປະຊຸມໃນຄັ້ງນີ້ໄດ້ຮັບການສະໜັບສະໜູນທຶນຈາກໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດແລະສະພາປະຊາຊົນຂັ້ນແຂວງ (STEPs).

**(ບຸນສີ ສິດທິເດດ)**




# ຫຼົງກະແສ ຫຼື ບໍ່?

# ດົ້ນກົບເມກ

ຫຼົງໂລກຫຼົງກະແສຄ່ານິຍົມ, ວັດຖຸນິຍົມ, ບໍລິໂພກນິຍົມ ຫຼື ຫຼົງດຳເນີນຊີວິດໄປຕາມຄວາມເຫໍ່ໃຊ້ແຕ່ອາລົມມັກໃນຄວາມສະບາຍຂອງຊີວິດໃນເມືອງ ແຕ່ບໍ່ໄດ້ຄຶດຄຳນຶງເຖິງເອກະລັກວັດທະນະທຳ, ວັດທະນະທຳ ດຳເນີນຊີວິດແບບຄວາມເປັນລາວ ຈະສູນຫາຍໄປມື້ລະໜ້ອຍ ຖ້າບໍ່ເຫັນຄຸນຄ່າ, ການຫຼົງເຫໍ່ຄ່ານິຍົມ, ວັດຖຸນິຍົມ ຈາກກະແສໂລກຫຼາຍເກີນໄປ ມັນຈະລວງໃຫ້ຄົນຮູ້ສຶກວ່າຂອງເຂົາດີກວ່າຄັກກວ່າ ແລະ ເຫັນແຕ່ຄຸນຄ່າພາຍນອກ ເຊິ່ງວັດທະນະທຳພາຍນອກຖ້ວມລົ້ນວັດທະນະທຳທ້ອງຖິ່ນຈົນມີຜູ້ຕັ້ງບັນຫາວ່າ: ແຮງງານລາວໄປຫາເງິນຢູ່ໄທ, ນັກຮ້ອງໄທມາຫາເງິນຢູ່ລາວ.

ເມື່ອໃດທີ່ກະແສວັດທະນະທຳນອກຖ້ວມວັດທະນະທຳພາຍໃນ ເຂົາຈະຫຼອມລວມເອົາຮອດວິຖີຊີວິດຄົນເມືອງ ພາໃຫ້ຄົນຈຳນວນໜຶ່ງ ຫຼົງຄິດດ້ອຍຄ່າຮາກເຫງົ້າຕົນເອງ-ບໍ່ຮູ້ມີສະຕິຮັກສາເຊີດຊູວັດທະນະທຳຕົນເອງທີ່ເປັນຮາກເຫງົ້າພູມປັນຍາ ທັງຮູບແບບການດຳເນີນຊີວິດ ແລະ ວິທີການປົກປັກຮັກສາສືບທອດພູມປັນຍາ ຈາກຮຸ່ນຄົນໜຶ່ງຕໍ່ໃສ່ອີກຮຸ່ນຄົນຕໍ່ມາ ດັ່ງນັ້ນ, ຜູ້ຂຽນຈຶ່ງເວົ້າວ່າ: ເຮົາຈະເບິ່ງກະແສໂລກ ແລະ ຮັບເອົາວັດທະນະທຳພາຍນອກແບບໃດເຖິງແມ່ນວ່າເຮົາມີນະໂຍບາຍໃຫ້ກັ່ນກອງ-ສັງລວມເອົາສິ່ງຍອດຍິ່ງ ແຕ່ໃນພຶດຕິກຳຕົວຈິງໃຜໄດ້ນຳພາເຮັດເປັນແບບຢ່າງໂດດເດັ່ນ ສັງຄົມໄດ້ເບິ່ງ ຜູ້ຂຽນຂໍມີຄຳເຫັນຕື່ມວ່າ ການໃສ່ຊື່ລູກຫຼານເຮົາ ກໍຍັງມີຊື່ລູກຫຼານເປັນຊື່ຕ່າງປະເທດ ເຊິ່ງເວົ້າໄດ້ວ່າເຮົາເສຍຕັ້ງແຕ່ບາດກ້າວທຳອິດແລ້ວ ຖ້າເວົ້າໃນແງ່ວັດທະນະທຳ ຈຸດນີ້ສະເໜີເພື່ອແລກປ່ຽນຄຳເຫັນກັບທ່ານຜູ້ອ່ານ.

ຫຼົງກະແສນີ້ ຈະວ່າກະແສໂລກທີ່ມີຫຼາຍມິຕິ ເຊັ່ນ: ຮູບແບບການໃຊ້ຊີວິດ, ຮູບແບບການບໍລິໂພກ ເມື່ອໄດ້ຮັບຄວາມສະບາຍຫຼາຍຄົນກໍຫຼົງຍ້ອງ ອັນໃດກໍແມ່ນຂອງນອກດີໄປໝົດ ແລະ ໃນມຸມກັບກັນ ຂອງໃນບໍ່ໄດ້ຖືກເຊີດຊູ ກໍຫົດຫາຍໄປເທື່ອລະໜ້ອຍ ດັ່ງທ່າອ່ຽງງົວຫາຍຈຶ່ງລ້ອມຄອກ ຫຼື ວ່າໄມ້ແກ່ກາຍຍາມເບັດ ເຫັດແກ່ກາຍຍາມແກງ.

ສະພາບປັດຈຸບັນນີ້ ໂລກກຳລັງຕໍ່ສູ້ກັນແຂ່ງຂັນກັນເລື່ອງວັດທະນະທຳ. ສະນັ້ນ, ຄວນເຕືອນກັນເລື່ອງຫຼົງກະແສ.






# ບຸນ – ໂຊກ ວາດສະໜາ

'ບຸນ' ເປັນຄຳນາມ ຈາກເຄົ້າປາລີ Puñña 'ປຸນຍະ' ໝາຍເຖິງ "ຄວາມສຸກສະບາຍ" ເຊັ່ນ

- ລາວເປັນຄົນມີບຸນ. ຄົນມີບຸນ ໝາຍເຖິງຄົນທີ່ມີຄວາມສຸກສະບາຍມີເງິນຄຳໃຊ້ຈ່າຍສະດວກສະບາຍ ບໍ່ມີຄວາມອຸກອັ່ງກັງວົນໃດໆ.

'ບຸນ' ຍັງໝາຍເຖິງ "ຄວາມດີ, ການກະທຳຄຸນງາມຄວາມດີ" ເຊັ່ນ

- ລາວມັກໄປທຳບຸນຢູ່ວັດ.
- ລາວເຮັດບຸນໂດຍໄປຊ່ວຍຄົນທີ່ຕົກທຸກໄດ້ຍາກ.

'ບຸນ' ໝາຍເຖິງ "ງານເທດສະການ" ເຊັ່ນ

- ຕົກເດືອນຫົກມາ ໄທບ້ານຂ້ອຍກໍພາກັນເຮັດບຸນບັ້ງໄຟ.
- ຢູ່ນະຄອນຫຼວງພະບາງ ເພິ່ນເຮັດບຸນຊ່ວງເຮືອຍາມເດືອນເກົ້າ.
- ຄາວຍັງນ້ອຍ ດວງເຮັງມັກຍ່າງແຕ່ດົງປ່າລານໄປບຸນທາດຫຼວງກັບບຸນຍືນ.

'ໂຊກ' ເປັນຄຳນາມ ມາຈາກເຄົ້າປາລີ jayaggaha (ຊະຍັຄຄະຫະ), ຂະແມແປງເປັນ(chok), ລາວແຜງເປັນ'ໂຊກ'ເຊິ່ງໝາຍເຖິງ"ສິ່ງທີ່ນຳຜົນມາໃຫ້ໂດຍບໍ່ໄດ້ຄາດໝາຍໄວ້ (ມັກໃຊ້ໃນທາງດີ), ລາບ, ເຖິງຄາວດີ, ການໄດ້ດີ, ການໄດ້ສິ່ງທີ່ຕ້ອງການ ຫຼື ໄດ້ສິ່ງທີ່ປາດຖະໜາ" ເຊັ່ນ

- ລາວເປັນຜູ້ໂຊກດີ ໄດ້ຮັບລາງວັນທີ 1.
- ຈັ່ງແມ່ນລາວໂຊກແທ້ໆ ຢູ່ບໍ່ຢູ່ກໍໄດ້ລົດມາຂີ່.
- ລາວເປັນຄົນມີໂຊກແທ້ໆ ຖືກຫວຍຢູ່ຕະຫຼອດ.

'ວາດສະໜາ' ເປັນຄຳນາມຈາກເຄົ້າປາລີ-ສັນສະກິດ Vāsanā 'ວາສະນາ' ແລ້ວແຜງສຽງເປັນຄຳລາວວ່າ'ວາດສະໜາ'ເຊິ່ງຄວາມໝາຍເດີມໝາຍເຖິງ"ສິ່ງທີ່ສະສົມຢູ່ໃນຈິດສຳນຶກມາຢ່າງຍາວນານຈົນແກະອອກໄດ້ຍາກ" ທຽບໃສ່ຄຳລາວກໍໄດ້ແກ່ 'ສັນດານ' ນັ້ນເອງ. ແຕ່ 'ວາດສະໜາ' ໃນຄວາມໝາຍທີ່ເຮົາໃຊ້ຊູ່ມື້ນີ້ຜັດ ມີຄວາມໝາຍວ່າ "ກຸສົນທີ່ພາໃຫ້ໄດ້ລາບໄດ້ຍົດ, ບຸນຍາປາລະມີ" ເຊັ່ນ

- ຂ້ອຍຄົງບໍ່ມີວາດສະໜາໄດ້ນາງມາເປັນຄູ່ຄອງ.
- ເປັນວາດສະໜາຂອງລາວນໍທີ່ໄດ້ໄປຮຽນຕໍ່ຕ່າງປະເທດ.
- ຍ້ອນວາດສະໜາອ້າຍນີ້ມັນຕ່ຳ ເກີດເປັນຄົນກໍຈົນເຫຼືອລ້ຳ.

**# ຂໍ້ສັງເກດ:** ລາງເທື່ອຄຳຊຸມນີ້ກໍເວົ້າຊ້ອນກັນວ່າ 'ບຸນວາດສະໜາ' ຫຼື 'ໂຊກວາດສະໜາ' ເຊັ່ນ

- ຜູ້ໃດທີ່ປະສົບຄວາມຈະເລີນຮຸ່ງເຮືອງໃນຊີວິດ ພວກເຮົາກໍມັກເວົ້າວ່າ "ລາວມີບຸນວາດສະໜາ" ຫຼື "ເປັນໂຊກວາດສະໜາຂອງລາວນໍ!"




# ວິທີເຮັດວຽກ

**ພາກທີ 5**
**ບັນຫາວິທີເຮັດວຽກ**

ກ່ຽວກັບການວາງຄຳຂວັນ, ວາງແຜນການເຮັດວຽກ ແຜນການຕໍ່ສູ້ໂຄສະນາ, ຂຽນຈົດໝາຍເຫດ, ຂຽນໜັງສືພິມ, ກໍເຊັ່ນດຽວກັນ ບໍ່ມັກອິດທົນໄປຖາມປະຊາຊົນເພື່ອໃຫ້ຮູ້ວ່າເຂົາເຈົ້າຕ້ອງການຫຍັງ, ຢາກຟັງຫຍັງ, ຢາກຮູ້ຫຍັງ ແລະ ມຸ່ງໝາຍຢາກໄດ້ຫຍັງ ມີແຕ່ພະນັກງານຈຳນວນໜຶ່ງອັດປະຕູຊຸມກັນແລ້ວເຮັດອອກ, ນັ່ງມິດຢູ່ໃນຫ້ອງຂອງຕົນແລ້ວຂຽນແຜນການ, ນຶກວ່າສິ່ງທີ່ຕົນເຮັດຖືກ ນຶກວ່າສິ່ງທີ່ຕົນຂຽນນັ້ນມ່ວນ ບໍ່ຮູ້ຈັກວ່າການເຮັດແບບໃນຕົວ ນັ້ນມັນເປັນພຽງ "ລອກໝວດລີງນີ້ໄປຕິດໃສ່ຄ່າງປ່ານັ້ນເທົ່ານັ້ນ". ມັນບໍ່ເຊື່ອມ ເຂົ້າທາງໃດ ມັນບໍ່ໄດ້ເລື່ອງ ແລະ ບໍ່ເປັນຜົນປະໂຫຍດຫຍັງໝົດ. ຍັງມີເລື່ອງໜຶ່ງອີກຈະຕ້ອງເຕືອນຄະນະອົບຮົມ, ການອົບຮົມເປັນວຽກອັນໜຶ່ງທີ່ຕ້ອງການທີ່ສຸດ. ສຸພາສິດເກົ່າຂອງເຮົາ ເຄີຍເວົ້າໄວ້ວ່າ "ໝົກປາແດກກໍຕ້ອງມີຄູ ມັດພູກໍຕ້ອງມີຊ່າງ, "ຕ້ອງສິດນຳພໍ່ ຕ້ອງກໍ່ນຳຄູ" "ຕ້ອງຮຽນກິນ ຮຽນເວົ້າ ຮຽນມັດຫໍ່ເຂົ້າ ໄຂຫໍ່ຄວາມກິນ".

ວຽກງ່າຍທີ່ສຸດກໍຍັງຕ້ອງຮຽນ. ກະໂຕວຽກການປະຕິວັດປົດປ່ອຍຊາດແທ້ໆ ຖ້າບໍ່ມີການອົບຮົມຮ່ຳຮຽນ ບໍ່ຫ່ອນຈະເຮັດລ້ອນ. ແຕ່ວ່າເອກະສານທີ່ຈະເອົາໃຫ້ຮຽນນັ້ນຕ້ອງເຮັດແນວໃດ ໃຫ້ແນໃສ່ແຕ່ສິ່ງທີ່ຕ້ອງການໃຊ້, ທີ່ຈຳເປັນແທ້ໆສຳລັບປະຊາຊົນຕ້ອງຖາມເບິ່ງວ່າ ຄົນຜູ້ມາຮຽນນັ້ນ ຍິນດີຮັບການຮຽນອັນນັ້ນແລ້ວ ແຕ່ເມື່ອຮຽນແລ້ວໄປໃຊ້ໄດ້ໂລດບໍ່? ຈະປະຕິບັດໄດ້ໂລດບໍ່?.

ອ່ານຕໍ່ສະບັບໜ້າ...



# ຂຽນຄຳລາວໃຫ້ຖືກ

# ຄູແສງ

| ຖືກ | ຜິດ |
|---|---|
| ສັນຍະລັກ | ສັນຍາລັກ |
| ສັນຍາຮັກ | ສັນຍະຮັກ |
| ເຜື່ອແຜ່ | ເພື່ອແຜ່ |
| ເພື່ອຊາດ | ເຜື່ອຊາດ |
| ວິຖີທາງ | ວິທີທາງ |
| ວິທີການ | ວິຖີການ |
| ຫ່າຝົນ | ຮ່າຝົນ |
| ຜີຮ່າ | ຜີຫ່າ |
| ບໍ່ຫ່ອນເປັນ | ບໍ່ຮ່ອນເປັນ |
| ຮ່ອນຄຳ | ຫ່ອນຄຳ |



ສຸກສະບາຍທາຍໂລດ

# ກະທຽມ ມີຄຸນປະໂຫຍດ ຫຼາກຫຼາຍກວ່າທີ່ທ່ານຄິດ

**ໂດຍ: ທິວກະທິ**



ກະທຽມເປັນອາຫານ ແລະ ສະໝຸນໄພທີ່ມີການໃຊ້ມາຕັ້ງແຕ່ສະໄໝບູຮານ ກະທຽມນັ້ນມີສັບພະຄຸນແລະປະໂຫຍດຊ່ວຍຫຼຸດຄວາມສ່ຽງໄດ້ຫຼາຍໂຣກແລະຊ່ວຍບັນເທົາອາການເບື້ອງຕົ້ນໄດ້ດັ່ງນີ້:

**1. ຫຼຸດໄຂມັນ, ຫຼຸດຄວາມສ່ຽງໂຣກຫົວໃຈ:** ໃນກະທຽມມີສານອັນໄລຊິນທີ່ຊ່ວຍຫຼຸດຄໍເລັສເຕີລໍໃນເລືອດໄດ້ 10 ເປີເຊັນ ຂອງຄໍເລັສເຕີລໍທັງໝົດໃນຮ່າງກາຍ, ຊ່ວຍຫຼຸດຄວາມສ່ຽງໂຣກຫົວໃຈ ແລະ ໂຣກຫຼອດເລືອດຫົວໃຈໄດ້ສ່ວນໜຶ່ງ, ແຕ່ກໍຂຶ້ນກັບປັດໄຈສ່ຽງອື່ນໆແລະພຶດຕິກຳແຕ່ລະບຸກຄົນ.

**2. ບັນເທົາອາການຫວັດ:** ເພາະວ່ານ້ຳມັນຫອມລະເຫີຍໃນກະທຽມ ສາມາດຕ້ານເຊື້ອແບັກທີເຣຍ, ເຊື້ອຣາ ແລະ ເຊື້ອໄວຣັດ, ພ້ອມທັງຊ່ວຍຂະຫຍາຍທາງເດີນຫາຍໃຈ, ຊ່ວຍຫຼຸດອາການໄອ ແລະ ເຮັດໃຫ້ຫາຍໃຈສະດວກຂຶ້ນ.

**3. ຫຼຸດຄວາມສ່ຽງໂຣກມະເຮັງລຳໄສ້ໃຫຍ່:** ກະທຽມເປັນພືດທີ່ມີໄຟເບີຢູ່ 2 ຊະນິດຄື: ໄຟເບີຊະນິດລະລາຍນ້ຳ ແລະ ຊະນິດບໍ່ລະລາຍນ້ຳ, ເຊິ່ງໄຟເບີທີ່ຢູ່ໃນກະທຽມມີສ່ວນຊ່ວຍຫຼຸດຄວາມສ່ຽງການເກີດໂຣກມະເຮັງລຳໄສ້ໃຫຍ່ໄດ້. ແຕ່ຕ້ອງກິນກະທຽມສົດທີ່ບໍ່ໄດ້ຜ່ານການປຸງສຸກ ເພາະຄວາມຮ້ອນຈະຫຼຸດຄຸນຄ່າສານອາຫານໃນກະທຽມ.

**4. ຫຼຸດອາການແໜ້ນທ້ອງ, ຈຸກສຽບ:** ມີການວິໄຈພົບວ່າ ກະທຽມມີສານ (Gastroenteric allechalcone) ເຊິ່ງຊ່ວຍເພີ່ມການບີບຕົວຂອງລຳໄສ້ ຈຶ່ງຊ່ວຍລຳລຽງອາຫານໃນກະເພາະອາຫານ ແລະ ລຳໄສ້ນ້ອຍ ເຮັດໃຫ້ເກີດການຂັບຖ່າຍລົມ ແລະ ຊ່ວຍເພີ່ມນ້ຳຍ່ອຍໄດ້ອີກດ້ວຍ.

**5. ປິ່ນປົວຂີ້ກາກ, ຂີ້ເກື້ອນທີ່ເກີດຈາກເຊື້ອຣາ:** ເນື່ອງຈາກນ້ຳໃນກະທຽມສາມາດຂ້າເຊື້ອຣາ ແລະ ແບັກທີເຣຍ ດັ່ງນັ້ນ, ກໍສາມາດບັນເທົາໄດ້ ໂດຍການນຳເອົາກະທຽມສົດຊອຍເປັນຕ່ອນບາງໆຖູບໍລິເວນຜິວໜັງທີ່ເປັນເຊື້ອຣາ ມື້ລະ 2 ຄັ້ງເພື່ອຊ່ວຍໃຫ້ການທາຢາຊຶມລົງຜິວໜັງໄດ້ດີຂຶ້ນ.

6. ຫຼຸດການຄັນຈາກແມງໄມ້ກັດ ນ້ຳໃນກະທຽມ ສາມາດນຳມາທາຊ່ວຍຫຼຸດການຄັນຈາກແມງໄມ້ກັດໄດ້.



## ອາດ ກະວີລາວ

## ລະວັງ

**# ມະນີວອນ ພົມມະລິນ**

❊ ກອນນີ້ ຂຽນຂີດແຕ້ມ
ສັງຄົມເປັນປາງຫຼາຍ
ຂານພໍພຽງຫວນຮູ້
ຈຳມາໄຂຂ່າວຂໍ້

ຕາມແຕ່ຕາເຫັນ
ກ່າຍກອງເກີນຕ້ານ
ຄອງຄົນຄວນຮ່ຳ
ພໍໃຫ້ຮິ່ນຮອນ

❊ ຕອນນີ້ ທາງທ່ຽວດັ້ນ
ລົດຂະຫຍາຍຍາມການ
ທະຍອຍຍົນຍານຍ້າຍ
ໃຜກໍມີວຽກເວັ້ນ

ຜັນປ່ຽນແປງຫຼາຍ
ຜ່ານໄປເປັນຮ້ອຍ
ຫຼາຍຄັນຂັບຂີ່
ເຫັນຟ້າວຝັ່ງເຝືອນ

❊ ໄຟແດງເຕືອນຕອກຢ້ຳ
ນາທີການຊີວິດ
ຢ່າສະແດງຕົນແຕ້ມ
ເລັ່ງລົດໄວເຜັ່ນຜ້າຍ

ຄຳນຶງແນ່ດວງຈິດ
ຄິດຄວນທວນແຈ້ງ
ແຖມມົນແມນເກັ່ງ
ໝາຍລ້ຳລ່ວງເກີນ

❊ ຄຳເຕືອນຕວງຕໍ່ປ້າຍ
ວາງເປັນສັນຍານເຍືອງ
ຄວນທຳຕາມດີໄດ້
ລົດລາງຫຼາຍກໍແກ້

ຢາຍຢູ່ແຄມທາງ
ເລື່ອງເກນກົນຫ້າມ
ໄປມາມັນງ່າຍ
ການແຫຍ້ຍາດກັນ

❊ ບາງຄັນ ລວນລ່ວງເລື້ອຍ
ເປັນຕາຊັງຊຸມເຊົາ
ຂອງກິນຟາຍຟົມຖິ້ມ
ຄົນຫຼັງວິນວອກເວັ້ນ

ເຄີຍຮ່ວມຫວນເຫັນ
ຂັບເອົາອັນຮ້າຍ
ລົມລົງໂຍນອອກ
ຕຳເສັ້ນສ່ວນຕາ

❊ ຈົນທະຫຼາຫຼ່າວລົ້ມ
ໂລຫິດລິນລາມໄຫຼ
ສັງວຽນຄົນເຄີຍພໍ້
ກິນຫຼາຍເລີຍເຫຼົ່າຖິ້ມ

ຈົມແຈບຈຳດີນ
ມືດມົວມອນມ້ຽນ
ມໍມືມັກງ່າຍ
ມືໄມ້ໄປ່ລະວັງ

❊ ສັງຄົມເປັນປຸ່ມເປື້ອນ
ຂອງເຫຼືອໂປປ່າງປະ
ໃຈຄົນໂດຍດຽວດ້າມ
ຄັນຮຽມຕຽນຕ່າວຕ້ານ
ຜິດໃຈແຮງຢ່າຮ້າຍ

ເໝືອນດັ່ງຖອມໂຖ
ປ່ອຍລົງລວມໄວ້
ຄືກັນມິແປປ່ຽນ
ຂານຄວາມຈິງແຈ່ມແຈ້ງ
ອະໄພໃຫ້ແກ່ຮຽມ ແດ່ທ້ອນ!

## ຜັກຫາຍ ລະບາຍ



*(ເລື່ອງເບົາໆ ເອົ້າແບບກັນເອງ ບໍ່ເຄັ່ງພິທີການ)*

**# ສາວຈົ້ມ**

❊ **ວັນທີ 19 ພຶດສະພາ**ນີ້ ເປັນວັນດີເຫຼືອລົ້ນ ຫຼາຍຄົນຍັງຈ່າຈື່ ເປັນ**ມື້ກຳເນີດ**ເຈົ້າ ປະທານໂຮ່ຊີ່ມິງ **ທາງອຽນອາຍກລັກ**ຜູ້ຮັກຊາດ ນາມຊ່າໂຮ່ ຈີ ມິງ ເປັນຜູ້ນຳ ທອບໄພສ່ອງເຍືອງປະຊາເຊື້ອ **ອິບດູລົບໃສແລ້ງ** ເຮືອງຮອງມາຕະຫຼອດ ເປັນຍ້ອນລຸງ ແນ່ແທ້ **ນຳພາສ້າງສືບສານ** ລຸງນຳພາຕໍ່ຕ້ານ **ເດີນຕາມພັກກອມມູນິດ** ບໍ່ຄິດຫລົງຜົນໃດ ພຽງໄພ່ປະຊາສຸກລົ້ນ ໂລກາຈົບຍ່ຍ້ອງ **ຄຸນຄວາມດີຈາລຶກ** ຫຼາຍສິບປີຜ່ານພົ້ນ ໂລກາກອ້າງບໍ່ລ່າລືມ **ລຸງເອີຍ!**

## ຊອບຍິ້ມ

**# ແອ່ບຕຸ້ງ**

## ເລື່ອງ: ເກ່ງເກີນບັນຍາຍ

ທ້າວປິຕິນັກຮຽນຫ້ອງ ມ2ຖາມເອື້ອຍຄູວ່າ:ຫຼັງຈາກເລີກຮຽນແລ້ວ ຂໍລົມນຳໄດ້ບໍ່? ເອື້ອຍຄູຮັບປາກວ່າໄດ້, ຫຼັງເລີກຮຽນຄູກໍເອີ້ນທ້າວປິຕິມາຫາ ແລ້ວຖາມວ່າ:

**ເອື້ອຍຄູ:** ລົມໄດ້ບາດນີ້ ນ້ອງມີຫຍັງບໍ່?

**ປີຕິ:** ນ້ອງຄິດວ່າ ຖ້າສົມທຽບໃສ່ໝູ່ໃນຫ້ອງນີ້ ນ້ອງສະຫຼາດໂພດ, ເວລາຮຽນກໍຮູ້ສຶກລ່າຄານ, ນ້ອງຢາກຂຶ້ນໄປຮຽນຢູ່ຊັ້ນ ມ7 ໂລດໄດ້ບໍ່?

ເອື້ອຍຄູນຳເອົາເລື່ອງນີ້ໄປລົມນຳອຳນວຍການ, ແລ້ວນັດທ້າວປີຕິໄປທົດສອບຄວາມສະຫຼາດ ເຊິ່ງມີບັນດາຄູອາຈານເຂົ້າຮ່ວມສຳພາດນຳ

**ທ່ານອຳນວຍການ:** 36 ຄູນ 49 ອອກເທົ່າໃດ?

**ປີຕິ:** 1.764

**ທ່ານອຳນວຍການ:** 363 ຄູນ 363 ອອກເທົ່າໃດ?

**ປີຕິ:** 131769

ການທົດສອບດຳເນີນມາເຖິງຊົ່ວໂມງ ທ້າວປີຕິບໍ່ຄາຈັກຄຳຖາມ, ທ່ານອຳນວຍການເລີຍບອກໃຫ້ເອື້ອຍຄູສຳພາດ

+ ງົວມີ 4 ແລ ະເອື້ອຍມີ 2 ແມ່ນຫຍັງ?
- ຂາ
+ ຢູ່ເສື້ອເອື້ອຍ ແລະໂສ້ງນ້ອງມີຫຍັງ?
- ຖົງ
+ ຢູ່ບ່ອນໃດແມ່ຍິງມີຂົນກູດຫຼາຍກວ່າໝູ່?
- ອາຟຣິກາ
+ ແມ່ນຫຍັງອ່ອນໆ ເວລາຖືກມືຜູ້ຍິງແລ້ວແຂງ?
- ສີທາເລັບ
+ ແມ່ນຫຍັງຢູ່ກາງຂາ
- ຫົວເຂົ່າ
+ ຕອນຜູ້ຍິງໂສດມັນແຄບ ບາດເອົາຜົວແລ້ວກວ້າງ ແມ່ນຫຍັງ?
- ຕຽງ
+ ສ່ວນໃດຂອງຮ່າງກາຍເຮົາປຽກຢູ່ຕະຫຼອດ
- ລີ້ນ
+ ແມ່ນຫຍັງຊຽບຊຶ້ນຕົ້ນດ້ວຍຕົວ ຫ ບາງຄັ້ງແຫ້ງ ແລະ ບາງຄັ້ງມີນ້ຳ?
- ຫ້ວຍ

ພໍຮອດຄຳຖາມນີ້, ອຳນວຍການທີ່ກຳລັງເຫື່ອແຕກບໍ່າຄຳຖາມເອື້ອຍຄູ ສອດຂຶ້ນວ່າ

**ອຳນວຍການ:** ສົ່ງລາວໄປຮຽນດົງໂດກເລີຍຊາ, ຂ້ອຍເອງຍັງຕອບບໍ່ໄດ້ ອັນຄຳຖາມຍາກໆແບບນີ້

## ຄະຕິເຕືອນໃຈ

**# ດອກຫຍ້າ**

ເຫັນວ່າປາກບົກນ້ອຍ ຢ່າຟ້າວຢຽບລົງແຮງ ຫຼາຍເນີ
ບາດບົກໂຮມແຮງກັນ ຊິຕອດຕາຍໂຕຊ້າງ

ລັດຖະສະພາຕ່າງປະເທດ

## 25 ພັກການເມືອງ, ພັກປະສົມ ລົງແຂ່ງຂັນເລືອກຕັ້ງລັດຖະສະພາມົງໂກລີ

ເມື່ອວັນອັງຄານທີ 30 ເມສາຜ່ານມາ, ຄະນະກຳມະການການເລືອກຕັ້ງທົ່ວໄປຂອງປະເທດມົງໂກລີ ຖະແຫຼງວ່າ: 23 ພັກການເມືອງ ແລະ 2 ພັກປະສົມ ໄດ້ລົງທະບຽນເຂົ້າຮ່ວມການເລືອກຕັ້ງລັດຖະສະພາ.

ມົງໂກລີ, ມີປະຊາກອນ 3,5 ລ້ານຄົນ, ໄດ້ກຳນົດເອົາວັນທີ 28 ມິຖຸນາ 2024 ເປັນວັນເລືອກຕັ້ງຄັ້ງຕໍ່ໄປຂອງສະພາຄູຣານໃຫຍ່ (State Great Khural) ເຊິ່ງເປັນລັດຖະສະພາທີ່ມີສະພາດຽວ (unicameral) ຂອງປະເທດ.

ໃນວັນທີ 31 ພຶດສະພາ 2023, ລັດຖະສະພາຂອງມົງໂກລີ ໄດ້ອະນຸມັດການປັບປຸງເພື່ອເພີ່ມຈຳນວນສະມາຊິກລັດຖະສະພາ ຈາກ 76 ເປັນ 126 ທີ່ນັ່ງ ໃນລັດຖະທຳມະນູນຂອງປະເທດ.

ນອກຈາກນັ້ນ, ສະມາຊິກລັດຖະສະພາ ຈະໄດ້ຮັບການເລືອກຕັ້ງໂດຍໃຊ້ລະບົບການເລືອກຕັ້ງແບບປະສົມ, ໃນນັ້ນ, ສະມາຊິກ 78 ທີ່ນັ່ງ ຈະໄດ້ຮັບການເລືອກຕັ້ງແບບແບ່ງເຂດ ຫຼື ການເປັນຕົວແທນສ່ວນໃຫຍ່ (majority representation) ແລະ 48 ທີ່ນັ່ງ ແບບຕົວແທນສັດສ່ວນ (proportional representation) ຫຼື ແບບບັນຊີລາຍຊື່.

**ແຫຼ່ງຂ່າວ: ຊິນຮວາ**



## ຊອກດານີ ຈະຈັດການເລືອກຕັ້ງສະພາຜູ້ແທນລາສະດອນ ໃນວັນທີ 10 ກັນຍານີ້




ຄະນະກຳມະການການເລືອກຕັ້ງເອກະລາດ ຫຼື ໄອອີຊີ (Independent Election Commission-IEC) ຂອງຊອກດານີ ຫຼື ຈໍແດນ ກ່າວໃນວັນພຸດທີ 24 ເມສາຜ່ານມາວ່າ: ການເລືອກຕັ້ງສະມາຊິກສະພາຜູ້ແທນລາສະດອນ (ສະພາຕ່ຳ) ຈະຈັດຂຶ້ນໃນວັນທີ 10 ກັນຍານີ້, ຕາຕະລາງເວລາສຳລັບທຸກຂັ້ນຕອນຂອງຂະບວນການເລືອກຕັ້ງ ຈະຖືກປະກາດໃນເດືອນພຶດສະພາ; ຕາມສະຖານີໂທລະພາບຂອງລັດ Al Mamlak ລາຍງານ.

ໃນຕອນເຊົ້າວັນດຽວກັນ, ກະສັດ ອັບດຸນລາ ທີ II (Abdullah II) ຂອງຊອກດານີ ໄດ້ສັ່ງໃຫ້ຈັດການເລືອກຕັ້ງສະພາຜູ້ແທນລາສະດອນ ຕາມຂໍ້ກຳນົດຂອງກົດໝາຍວ່າດ້ວຍການເລືອກຕັ້ງ, ກະສັດ ຍັງໄດ້ໄປຢ້ຽມຢາມຄະນະກຳມະການການເລືອກຕັ້ງເອກະລາດ ເພື່ອກວດກາຄືນການກະກຽມຄວາມພ້ອມໃຫ້ແກ່ຂະບວນການການເລືອກຕັ້ງ.

ຈາກຂໍ້ມູນຂອງ ໄອອີຊີ ໃຫ້ຮູ້ວ່າ: ມີຜູ້ມີສິດລົງຄະແນນສຽງເລືອກຕັ້ງ 5 ລ້ານກວ່າຄົນ, ໃນຂະນະທີ່ໜ່ວຍປ່ອນບັດ 1.600 ແຫ່ງ ຖືກກຳນົດໄວ້ແລ້ວ ແລະ ຫົວໜ້າຄະນະກຳມະການການເລືອກຕັ້ງ 19 ທ່ານ ໄດ້ຖືກຮັບເລືອກ.

**ແຫຼ່ງຂ່າວ: ຊິນຮວາ**

## ອີຣັກ ຜ່ານຮ່າງກົດໝາຍລົງໂທດ "ຄູ່ຮັກເພດດຽວກັນ" ຈຳຄຸກ 10-15 ປີ

ສະພາຜູ້ແທນປະຊາຊົນ ຫຼື ລັດຖະສະພາຂອງອີຣັກ ໄດ້ຜ່ານຮ່າງກົດໝາຍສະບັບໜຶ່ງເມື່ອວັນເສົາທີ 27 ເມສາຜ່ານມາ ທີ່ກຳນົດໃຫ້ບຸກຄົນທີ່ມີຄວາມສຳພັນທາງເພດກັບຄົນເພດດຽວກັນ ເປັນຄວາມຜິດທາງອາຍາ ເຊິ່ງຈະໄດ້ຮັບໂທດຈຳຄຸກສູງສຸດ 15 ປີ.

ຜູ້ປ່ຽນເພດຈະຖືກຕັດສິນລົງໂທດຈຳຄຸກ 3 ປີ ພາຍໃຕ້ການປັບປຸງກົດໝາຍວ່າດ້ວຍຕ້ານການຄ້າປະເວນີ (anti-prostitution law) ສະບັບປີ 1988 ເຊິ່ງໄດ້ຮັບການຮັບຮອງເອົາໃນກອງປະຊຸມທີ່ມີສະມາຊິກສະພາຜູ້ແທນປະຊາຊົນ 170 ຈາກທັງໝົດ 329 ທ່ານ ເຂົ້າຮ່ວມ.

ການປັບປຸງກົດໝາຍສະບັບນີ້ ອະນຸຍາດໃຫ້ສານຕັດສິນລົງໂທດຈຳຄຸກຜູ້ທີ່ມີຄວາມສຳພັນທາງເພດກັບຄົນເພດດຽວກັນ 10-15 ປີ, ເຊັ່ນດຽວກັນກັບການຕັດສິນລົງໂທດຈຳຄຸກຢ່າງໜ້ອຍ 7 ປີ ສຳລັບການສົ່ງເສີມຄວາມສຳພັນທາງເພດຂອງເພດດຽວກັນ ແລະ ຈຳຄຸກ 1-3 ປີ ສຳລັບຜູ້ຊາຍທີ່ຕັ້ງໃຈປະຕິບັດຕົວຄືກັບແມ່ຍິງ; ນອກຈາກນັ້ນ, ຍັງກຳນົດໃຫ້ການປ່ຽນເພດສະພາບໂດຍອີງໃສ່ຄວາມປາຖະໜາ ແລະ ຄວາມມັກສ່ວນບຸກຄົນ ເປັນຄວາມຜິດທາງອາຍາ ລວມທັງການລົງໂທດຕໍ່ຄົນຂ້າມເພດ ແລະ ທ່ານໝໍທີ່ດຳເນີນການຜ່າຕັດແປງເພດ ດ້ວຍໂທດຈຳຄຸກສູງສຸດ 3 ປີ.

ການປັບປຸງກົດໝາຍດັ່ງກ່າວ ຍັງຫ້າມອົງການຈັດຕັ້ງທີ່ສົ່ງເສີມການຮັກຮ່ວມເພດ ແລະ ລົງໂທດການແລກປ່ຽນຜົວລະຍາ (Wife Swapping) ດ້ວຍການລົງໂທດຈຳຄຸກຕັ້ງແຕ່ 10-15 ປີ.

ທ່ານ ຣາອິດ ອັນ-ມາລິກີ (Raed al-Maliki) ສະມາຊິກສະພາຜູ້ແທນປະຊາຊົນອີຣັກ, ຜູ້ສະເໜີປັບປຸງກົດໝາຍ ກ່າວວ່າ "ກົດໝາຍຂ້າງເທິງນີ້ ເຮັດໜ້າທີ່ເປັນມາດຕະການປ້ອງກັນ ເພື່ອປົກປ້ອງສັງຄົມຈາກບັນດາການກະທຳດັ່ງກ່າວ."

**ແຫຼ່ງຂ່າວ: AFP**



## ປະທານສະພາແຫ່ງຊາດບຸນກາລີ ຖືກໄລ່ອອກ



ທ່ານ ນາງ ຄີໂຣວາ (ດ້ານຫຼັງ) ແລະ ທ່ານ ເຊເລຍຊະຄ໊ອບ (ດ້ານໜ້າ)

ສະມາຊິກສະພາແຫ່ງຊາດ (ສສຊ) ສ່ວນຫຼາຍ ໄດ້ປົດທ່ານ ໂຣເຊນ ເຊເລຍຊະຄ໊ອບ (Rosen Zhelyazkov) ປະທານສະພາແຫ່ງຊາດບຸນກາລີ ເມື່ອວັນພະຫັດທີ 25 ເມສາຜ່ານມາ, ໜຶ່ງເດືອນເຄິ່ງກ່ອນການເລືອກຕັ້ງສະພາແຫ່ງຊາດ.

ໃນສະພາແຫ່ງຊາດທີ່ມີ 240 ທີ່ນັ່ງ, ທ່ານ ເຊເລຍຊະຄ໊ອບ ເຊິ່ງເປັນຕົວແທນຂອງພັນທະມິດ GERB-UDF ໄດ້ຖືກປົດອອກຈາກຕຳແໜ່ງ ດ້ວຍຄະແນນ 129 ສຽງ ຈາກພັນທະມິດ We Continue the Change-Democratic Bulgaria (PP-DB), ພັກ Revival ແລະ ພັກອື່ນໆອີກຈຳນວນໜຶ່ງ.

ທ່ານ ເຊເລຍຊະຄ໊ອບ ໄດ້ຮັບການເລືອກຕັ້ງໃນເດືອນເມສາ 2023 ບໍ່ດົນຫຼັງຈາກການເລືອກຕັ້ງສສຊຄັ້ງຫຼ້າສຸດ (2/4/2023), ຖືກກ່າວຫາວ່າລົ້ມເຫຼວຢ່າງເປັນລະບົບໃນການປະຕິບັດໜ້າທີ່ຂອງຕົນໃນຖານະປະທານສະພາແຫ່ງຊາດ.

ຕາມກົດລະບຽບຂອງສະພາແຫ່ງຊາດ, ຈົນກວ່າຈະມີການເລືອກຕັ້ງປະທານສະພາແຫ່ງຊາດຜູ້ໃໝ່, ຮອງປະທານສະພາແຫ່ງຊາດ ທີ່ເປັນຕົວແທນຂອງພັກໃນສະພາແຫ່ງຊາດ ຫຼື ພັນທະມິດທີ່ໃຫຍ່ທີ່ສຸດ ຈະດຳລົງຕຳແໜ່ງເປັນປະທານສະພາແຫ່ງຊາດ. ໃນປັດຈຸບັນ, ແມ່ນທ່ານ ນາງ ໂຣຊິດຊາ ຄີໂຣວາ (Rositsa Kirova) ກໍຍັງມາຈາກພັນທະມິດ GERB-UDF ເຊິ່ງມີ 69 ທີ່ນັ່ງ.

GERB-UDF ແລະ PP-DB ຈັດຕັ້ງລັດຖະບານຮ່ວມກັນຕາມຂໍ້ຕົກລົງ, ແຕ່ຫຼັງຈາກທ່ານ ນິໂຄລາຍ ເດນຄ໊ອບ (Nikolai Denkov) ນາຍົກລັດຖະມົນຕີ ຈາກພັນທະມິດ PP-DB ລາອອກຈາກຕຳແໜ່ງໃນວັນທີ 05 ມີນາ 2024, ພວກເຂົາກໍລົ້ມເຫຼວໃນການຮ່ວມມືກັນຕໍ່ໄປ.

ຄວາມລົ້ມເຫຼວໃນການສ້າງຕັ້ງລັດຖະບານໃໝ່ ໄດ້ພາໃຫ້ມີການເລືອກຕັ້ງ ສສຊ ໃນວັນທີ 09 ມິຖຸນາທີ່ຈະເຖິງນີ້.

**ແຫຼ່ງຂ່າວ: ຊິນຮວາ**

ເບິ່ງໄວ້ ໄດ້ບົດຮຽນ

❖ ວິເສດ ສະແຫວງສຶກສາ

# ສ້າງເງື່ອນໄຂ ເພື່ອປະສິດທິພາບແຮງງານ

ເນື້ອໃນຂອງບົດນີ້ ຍັງຂໍກ່ຽວໆວຽນໆ ຢູ່ກັບເລື່ອງແຮງງານ ເພື່ອໃຫ້ເຂົ້າກັບບັນຍາກາດປິ່ນອ້ອມວັນແຮງງານສາກົນ. ເລື່ອງທັງໝົດນີ້ ຜູ້ຂຽນເກັບກຳຈາກໜັງສືພິມ ແລະ ຈາກຊ່ອງຂ່າວຕ່າງໆ ເປັນເລື່ອງທີ່ຈະຊ່ວຍໃຫ້ທ່ານຜູ້ອ່ານເຫັນໄດ້ ກ່ຽວກັບນະໂຍບາຍພັດທະນາ ແລະ ສົ່ງເສີມແຮງງານຢູ່ບາງປະເທດ ໂດຍສະເພາະໃນອາຊຽນ.

ຂໍເລີ່ມຈາກປະເທດ**ສິງກະໂປ**ກ່ອນ. ປະເທດນີ້, ແຮງງານຈາກຫຼາຍປະເທດ ຕ່າງກໍໄຝ່ຝັນຢາກໄປອອກແຮງງານ ຍ້ອນວ່າມີນະໂຍບາຍທີ່ໂປ່ງໃສ, ເງິນຄ່າເມື່ອຍສູງ ບວກກັບການບໍລິການດ້ານສະຫວັດດີການສັງຄົມເປັນເລີດ. ແຕ່...ແຕ່... ຕ້ອງເປັນແຮງງານຄຸນນະພາບ (ຍົກເວັ້ນບາງວຽກ ວຽກຮັບໃຊ້ໃນຄົວເຮືອນ). ນະໂຍບາຍດີໆຂອງສິງກະໂປຕໍ່ແຮງງານຕ່າງປະເທດ ທີ່ຜູ້ຂຽນຖືວ່າເປັນແບບຢ່າງທີ່ດີກໍຄື: 1. ທັດສະນະລວມໆຂອງສິງກະໂປ ທີ່ຖືວ່າແຮງງານຕ່າງປະເທດນັ້ນ ມີຄວາມສຳຄັນ ແລະ ຈຳເປັນ ສຳລັບການພັດທະນາເສດຖະກິດ-ສັງຄົມສິງກະໂປ. ທັດສະນະດັ່ງກ່າວ ສະແດງອອກໃນການໃຫ້ກຽດ, ເຄົາລົບສິດທິ ແລະ ຜົນປະໂຫຍດທີ່ແຮງງານຕ່າງປະເທດຄວນໄດ້; 2. ມີກົນໄກແກ້ໄຂຄວາມຂັດແຍ່ງລະຫວ່າງນາຍຈ້າງ ແລະ ລູກຈ້າງ (ເຊິ່ງເປັນແຮງງານຕ່າງປະເທດ) ຢ່າງທັນການ ແລະ ໂປ່ງໃສ ຕົວຢ່າງ: ຫວ່າງບໍ່ດົນມານີ້, ທາງການສິງກະໂປ ໄດ້ອອກກຳນົດຫ້າມນາຍຈ້າງເກັບຮັກສາເງິນແຮງງານໄວ້ໃຫ້ລູກຈ້າງ. ພາຍໃຕ້ຂໍ້ກຳນົດນີ້, ນາຍຈ້າງຕ້ອງຊຸກຍູ້ໃຫ້ລູກຈ້າງທຸກຄົນເປີດບັນຊີຝາກເງິນຢູ່ທະນາຄານ. ຖ້ານາຍຈ້າງຄົນໃດລະເມີດກໍຈະໄດ້ຮັບໂທດຕາມກົດໝາຍ. ທີ່ຕ້ອງມີຂໍ້ກຳນົດນີ້ ກໍເພາະວ່າເຄີຍມີກໍລະນີນາຍຈ້າງບາງຄົນບ້ຽວ, ບໍ່ຈ່າຍເງິນທີ່ເກັບຮັກສາໄວ້ໃຫ້ລູກຈ້າງຕາມກຳນົດ ແລະ ອື່ນໆ; ຂໍ້ທີ 3 ທາງການ ສິງກະໂປ ໄດ້ອອກຂໍ້ກຳນົດຫ້າມຈ່າວຂາຍແຮງງານຕ່າງປະເທດແບບວັດຖຸສິ່ງຂອງ ເຊິ່ງເປັນການລະເມີດຕໍ່ກຽດສັກສີຂອງຄວາມເປັນຄົນ. ໃນເມື່ອກ່ອນ ເຄີຍມີກໍລະນີນັກທຸລະກິດ ນຳເຂົ້າແຮງງານຕ່າງປະເທດແລ້ວຈ່າວຂາຍຕໍ່ໃຫ້ໂຮງຈັກໂຮງງານ ຫຼື ຄົວເຮືອນຕ່າງໆດ້ວຍຮູບແບບທີ່ບໍ່ເໝາະສົມ.

ບັດນີ້ກ້ຽວໄປປະເທດ**ອິນໂດເນເຊຍ** ເຊິ່ງເປັນໜຶ່ງໃນບັນດາປະເທດ ທີ່ສົ່ງອອກແຮງງານຫຼາຍທີ່ສຸດ ໃນເມື່ອກ່ອນແຮງງານທີ່ສົ່ງອອກນັ້ນເປັນແຮງງານທັກສະຕ່ຳ ຫຼື ຈະເອີ້ນວ່າແຮງງານດິບກໍວ່າໄດ້ ທີ່ສ່ວນໃຫຍ່ເປັນແຮງງານຍິງ ທີ່ເຮັດວຽກເປັນຄົນໃຊ້ໃນຄົວເຮືອນ. ສິງກະໂປ, ມາເລເຊຍ ແມ່ນຕະຫຼາດແຮງງານໃຫຍ່ສຳລັບອິນໂດເນເຊຍ ໃນອາຊຽນ; ນອກນັ້ນ, ກໍແມ່ນໃນເຂດຕາເວັນອອກກາງ. ແລ້ວໃນຊຸມປີຫຼັງໆມານີ້ ໄດ້ເກີດມີກໍລະນີລະເມີດສິດທິຂອງແຮງງານອິນໂດເນເຊຍໃນຕ່າງແດນຫຼາຍຂຶ້ນເຊັ່ນ: ການລວນລາມທາງເພດ, ການຂູດຮີດແຮງງານ, ການຄ້າມະນຸດທີ່ແອບແຝງ ແລະ ອື່ນໆ. ບັນຫາເຫຼົ່ານີ້ ໄດ້ນຳໄປສູ່ການປະຕິຮູບລະບົບການສົ່ງອອກແຮງງານຂອງອິນໂດເນເຊຍໄປຕ່າງປະເທດຄື: ມີການຢຸດສົ່ງແຮງງານຍິງໄປເຮັດວຽກປະຈຳຄົວເຮືອນໃນບັນດາປະເທດທີ່ມີຄວາມສ່ຽງ (ຈະຖືກລວນລາມ) ສູງ, ບຳລຸງສ້າງໃຫ້ແຮງງານມີຄຸນນະພາບ, ມີທັກສະສູງ ບໍ່ແມ່ນແຮງງານດິບຄືແຕ່ກ່ອນ. ປັບປຸງຂໍ້ຕົກລົງກັບບັນດາປະເທດຕະຫຼາດແຮງງານ ກ່ຽວກັບເວລາພັກຜ່ອນຂອງແຮງງານຈາກອິນໂດເນເຊຍ ໃນນັ້ນລວມມີທັງຂໍ້ຫ້າມແຮງງານປະຈຳຄົວເຮືອນ ນອນພັກເຊົາຢູ່ກັບຄອບຄົວນາຍຈ້າງ ແລະ ອື່ນໆ ທັງໝົດທີ່ເລົ່າມາ ຄວນເປັນບົດຮຽນ ສຳລັບປະເທດພວກເຮົາ ກ່ອນຈະສົ່ງແຮງງານອອກໄປເຮັດວຽກຢູ່ຕ່າງປະເທດ.




## ຄວາມແຕກຕ່າງລະຫວ່າງ ຍິງສາວກັບນັກການທູດ

*#ບ່າວກະບື*

**ເມື່ອ**ນັກການທູດຕອບວ່າ: "ໄດ້" ເຂົາໝາຍຄວາມວ່າ: "ບາງທີ", ເມື່ອເຂົາຕອບວ່າ "ບາງທີ" ໝາຍຄວາມວ່າເຂົາປະຕິເສດ, ແຕ່ຖ້າເຂົາຕອບປະຕິເສດ ເຂົາຄົນນັ້ນບໍ່ແມ່ນນັກການທູດ.

ເມື່ອຍິງສາວຕອບວ່າ "ບໍ່" ນາງໝາຍຄວາມວ່າ "ບາງທີ" ເມື່ອນາງຕອບວ່າ "ບາງທີ" ນາງໝາຍຄວາມວ່າ "ໄດ້", ແຕ່ຖ້ານາງຕອບວ່າ "ໄດ້" ນາງຄົນນັ້ນບໍ່ແມ່ນນາງສາວ.

## Lady Vs Diplomat

*# BAOKBU*

When a diplomat says "yes" he means "maybe". When he says "maybe" he means "no" if he says "no" he's no diplomat.

When a lady says "no" she means "maybe" when she says "maybe" she means "yes" if she says "yes" she's no lady.

ຕາມພາສາ ກາຕູນ




ເມື່ອນ້ຳເມົາເຂົ້າປາກ ທາງຂຸມກໍກາຍເປັນທາງດີ

● ໂດຍ : ພູຜາ

TE SOLE

ທະນາຄານພັດທະນາລາວ
LDB Bank

**ຜູ້ຊີ້ນຳ**
ທ່ານ ສິງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**
ທ່ານ ສີສົມ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ
ທ່ານ ຄຳຫວັນ ດາລາວົງ

**ຄະນະບັນນາທິການ**
ທ່ານ ປອ. ພິດສະໄໝ ບຸນວິໄລ ຫົວໜ້າ ບກ
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ

**ກອງບັນນາທິການ**
ທ່ານ ນາງ ວັນນາລົມ ສຸລິວົງສັກ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ
ທ່ານ ນາງ ສຸພາວັນ ທອມສະນິດ
ທ່ານ ນາງ ປາກາລັກ ພົມມີໄຊ

**ອອກແບບ - ຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ